ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ

# ບົດລາຍງານ

## ຄວາມພ້ອມຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດ ສັນຍາອຳນວຍຄວາມສະດວກທາງດ້ານການຄ້າ

24 ສິງຫາ 2015

# ສາລະບານ


ບົດຄັດຫຍໍ້ ........................................................................ 3

ພາກທີ 1 ພາກສະເໜີ ........................................................................ 4

ພາກທີ 2 ການກະກຽມຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ........................................ 6

2.1 ຂັ້ນຕອນການໃຫ້ສັດຕະຍາບັນ ........................................................................ 6

2.2 ຂັ້ນຕອນການຮັບຮອງເອົາສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ........................................ 6

2.3 ຂັ້ນຕອນການມີຜົນບັງຄັບໃຊ້ຂອງອະນຸສັນຍາ ແລະ ສັນຍາອຳນວຍຄວາມສະດວກທາງດ້ານການຄ້າ .......... 7

ພາກທີ 3 ຄວາມພ້ອມຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ....... 9

3.1 ຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ໃນຂອບເຂດທົ່ວປະເທດ ........................................................................ 9

3.1.1 ຜົນການປະເມີນຄວາມຕ້ອງການ ແລະ ບູລິມະສິດຂອງ ສປປ ລາວ ກ່ຽວກັບ ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ........................................................................ 10

3.1.2 ຕົວກຳນົດຄວາມພ້ອມ ແລະ ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ........................................................................ 13

3.2 ຄວາມສາມາດຂອງ ສປປ ລາວ ທຽບກັບບັນດາປະເທດສະມາຊິກອາຊຽນ ແລະ ປະເທດດ້ອຍພັດທະນາ.... 15

ພາກທີ 4 ໄລຍະເວລາສຳລັບການກະກຽມຈັດຕັ້ງປະຕິບັດສັນຍາ........................................................ 17

ພາກທີ 5 ສະຫຼຸບຜົນການປະເມີນຄວາມພ້ອມຂອງ ສປປ ລາວ ........................................................ 19

ເອກະສານຊ້ອນທ້າຍ ........................................................................ 20

# ບົດຄັດຫຍໍ້


ການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າຂອງ ອົງການການຄ້າໂລກ (WTO) ເປັນຍຸດທະສາດອັນດີໃນການຫຼຸດຜ່ອນຕົ້ນທຶນທາງດ້ານການຄ້າໃຫ້ແກ່ປະເທດສະມາຊິກ. ແຕ່ວ່າຄວາມອາດສາມາດໃນການຈັດຕັ້ງປະຕິບັດສັນຍາຂອງແຕ່ລະປະເທດສະມາຊິກ ມີຄວາມແຕກຕ່າງກັນ ຕາມລະດັບການພັດທະນາເສດຖະກິດຂອງແຕ່ລະປະເທດ. ຈຸດປະສົງຂອງບົດລາຍງານສະບັບນີ້ ແມ່ນເພື່ອ: (1) ສະຫຼຸບຜົນການປະເມີນຄວາມຕ້ອງການ ແລະ ບູລິມະສິດຂອງວຽກງານອຳນວຍຄວາມສະດວກທາງດ້ານການຄ້າຂອງ ສປປ ລາວ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ; (2) ວິເຄາະຄວາມພ້ອມ ແລະ ຂໍ້ຄົງຄ້າງ ຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດບັນດາມາດຕາ ຂອງສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ໂດຍອີງໃສ່ 03 ຕົວຊີ້ວັດ ຄື: (1) ນິຕິກຳຂອງຂະແໜງການຮັບຜິດຊອບ, (2) ໂຄງລ່າງພື້ນຖານ, ແລະ (3) ບຸກຄະລາກອນ ທີ່ຕິດພັນກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ.

ຜົນການປະເມີນຊີ້ໃຫ້ເຫັນວ່າ: ໝວດ A ຂອງສັນຍາ ປະກອບດ້ວຍ 13 ມາດຕະການ; ໝວດ B ຂອງສັນຍາ ປະກອບດ້ວຍ 7 ມາດຕະການ; ໝວດ C ຂອງສັນຍາ ປະກອບດ້ວຍ 16 ມາດຕະການ. ນອກນັ້ນ, ຜົນການວິເຄາະ ສະແດງໃຫ້ເຫັນ ຕົວກຳນົດຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດໝວດ A ເຊິ່ງປະກອບດ້ວຍ 03 ຕົວຊີ້ວັດຄື: (1) ນິຕິກຳທີ່ເປັນພື້ນຖານແກ່ການຈັດຕັ້ງປະຕິບັດສັນຍາ ປະກອບດ້ວຍ ກົດໝາຍ 03 ສະບັບ ຄື: ກົດໝາຍວ່າດ້ວຍພາສີ, ກົດໝາຍ ວ່າດ້ວຍອາຫານ, ແລະ ກົດໝາຍ ວ່າດ້ວຍ ການປ້ອງກັນພືດ; (2) ໂຄງລ່າງພື້ນຖານໃນການຈັດຕັ້ງປະຕິບັດສັນຍາ ປະກອບດ້ວຍ ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ແລະ ລະບົບອາຊີກູດາ; (3) ບຸກຄະລາກອນໃນການຈັດຕັ້ງປະຕິບັດສັນຍາ ປະກອບດ້ວຍ ສະມາຊິກກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ (ກຂອຄ). ເຖິງຢ່າງໃດກໍ່ຕາມ, ຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາ ແມ່ນຍັງຕໍ່າກວ່າບັນດາປະເທດທາງຜ່ານ (ໄທ ແລະ ຫວຽດນາມ) ແລະ ປະເທດດ້ອຍພັດທະນາ ເປັນຕົ້ນແມ່ນການນຳໃຊ້ລະບົບອີເລັກໂທຣນິກ ແລະ ບຸກຄະລາກອນທີ່ມີຄວາມຮູ້ໃນລະດັບສູງໃນການບໍລິຫານຄວາມສ່ຽງ.

ສຳລັບໄລຍະເວລາໃນການກະກຽມຈັດຕັ້ງປະຕິບັດສັນຍາ, ສປປ ລາວ ອາດພິຈາລະນາ 03 ທາງເລືອກ ສຳລັບການແຈ້ງ ໝວດ A ແລະ ໃຫ້ສັດຕະຍາບັນສັນຍາ ຄື: (1) ເດືອນກັນຍາ ປີ 2015, (2) ເດືອນຕຸລາ ປີ 2015, ແລະ (3) ທ້າຍປີ 2016. ຜົນການວິເຄາະຄວາມພ້ອມຂອງ ສປປ ລາວ ຊີ້ໃຫ້ເຫັນວ່າ: (1) ສປປ ລາວ ມີຄວາມພ້ອມທີ່ຈະແຈ້ງໝວດ A ໃນເດືອນກັນຍາ ປີ 2015 ແລະ ໃຫ້ສັດຕະຍາບັນສັນຍາ ໃນທ້າຍປີ 2015; (2) ສປປ ລາວ ມີຄວາມພ້ອມທີ່ຈະແຈ້ງ ໝວດ A ໃນເດືອນຕຸລາ ປີ 2015 ແລະ ໃຫ້ສັດຕະຍາບັນສັນຍາ ໃນທ້າຍປີ 2015; ຫຼື (3) ສປປ ລາວ ຄວນແຈ້ງໝວດ A ໃນທ້າຍປີ 2015 ແລະ ໃຫ້ສັດຕະຍາບັນສັນຍາ ໃນທ້າຍປີ 2016 ເພື່ອສັງເກດຄວາມຄືບໜ້າການໃຫ້ສັດຕະຍາບັນຂອງບັນດາປະເທດດ້ອຍພັດທະນາອື່ນ. ເຖິງຢ່າງໃດກໍ່ຕາມ, ຄວາມແຕກຕ່າງຂອງໄລຍະເວລາ 1 ປີ ສຳລັບການໃຫ້ສັດຕະຍາບັນ ໃນທ້າຍປີ 2015 ແລະ ໃນທ້າຍປີ 2016 ຈະບໍ່ມີຜົນກະທົບຕໍ່ການປັບປຸງຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາ ຍ້ອນວ່າ ບັນດາຕົວກຳນົດຄວາມພ້ອມໃນການຈັດຕັ້ງປະຕິບັດສັນຍາ ເຊັ່ນ: ນິຕິກຳ, ໂຄງລ່າງພື້ນຖານ ແລະ ບຸກຄະລາກອນ ຈະບໍ່ມີການປ່ຽນແປງ ຫຼື ປ່ຽນແປງໜ້ອຍ ໃນຊ່ວງເວລາດັ່ງກ່າວ.

# ພາກທີ 1 ພາກສະເໜີ

ບົດລາຍງານສະບັບນີ້ ມີ 02 ຈຸດປະສົງຕົ້ນຕໍຄື: (1) ສະຫຼຸບຜົນການປະເມີນຄວາມຕ້ອງການ ແລະ ບູລິມະສິດຂອງວຽກງານອຳນວຍຄວາມສະດວກທາງດ້ານການຄ້າຂອງ ສປປ ລາວ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ; (2) ວິເຄາະຄວາມພ້ອມຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດບັນດາມາດຕາ ຂອງສົນທິສັນຍາອຳນວຍຄວາມສະດວກທາງດ້ານການຄ້າ, ແນໃສ່ຊີ້ໃຫ້ເຫັນຂໍ້ສະດວກ ແລະ ຂໍ້ຄົງຄ້າງ ສຳລັບການແຈ້ງ ແລະ ການໃຫ້ສັດຕະຍາບັນບັນດາມາດຕາຂອງສົນທິສັນຍາຕໍ່ ຄະນະກຳມະການຂອງ ອົງການການການຄ້າໂລກ (WTO) ຕາມໄລຍະເວລາທີ່ເໝາະສົມ.

ຈຸດປະສົງຂອງສົນທິສັນຍາອຳນວຍຄວາມສະດວກທາງດ້ານການຄ້າຂອງ ອົງການການຄ້າໂລກ (WTO) ແມ່ນເພື່ອປັບປຸງໂອກາດທາງດ້ານການຄ້າຂອງປະເທດກຳລັງພັດທະນາ ເປັນຕົ້ນແມ່ນ ການຫຼຸດຜ່ອນຕົ້ນທຶນທາງດ້ານການຄ້າໃຫ້ແກ່ພາກທຸລະກິດ ໃນບັນດາປະເທດທີ່ຕ້ອງການເອກະສານປະກອບທາງດ້ານການຄ້າຫຼາຍສະບັບ. ສົນທິສັນຍາດັ່ງກ່າວ ໄດ້ຖືກຮັບຮອງເອົາ ທີ່ກອງປະຊຸມລັດຖະມົນຕີຄັ້ງທີ IX ຂອງ WTO ທີ່ບາລີ, ປະເທດອິນໂດເນເຊຍ ໃນເດືອນ ທັນວາ 2013.

ເນື້ອໃນຂອງສົນທິສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ປະກອບດ້ວຍ 03 ພາກ ແລະ 24 ມາດຕາ ເຊິ່ງມີຜົນສັກສິດທາງດ້ານກົດໝາຍ ແລະ ໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ໃຫ້ແກ່ບັນດາປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາ. ພາກທີ 01 ປະກອບດ້ວຍ 12 ມາດຕາ, ແນໃສ່ ເພີ່ມຄວາມວ່ອງໄວໃຫ້ແກ່ການເຄື່ອນຍ້າຍ, ການປ່ອຍ ແລະ ການສະສາງ ສຳລັບສິນຄ້ານຳເຂົ້າ, ສິນຄ້າສົ່ງອອກ, ແລະ ສິນຄ້າຜ່ານແດນ. ພາກທີ 02 ປະກອບດ້ວຍ 10 ມາດຕາ, ແນໃສ່ໃຫ້ຄວາມຊ່ວຍເຫຼືອ ແກ່ບັນດາປະເທດກຳລັງພັດທະນາ ແລະ ບັນດາປະເທດດ້ອຍພັດທະນາໃນການຈັດຕັ້ງປະຕິບັດສົນທິສັນຍາ. ພາກທີ 03 ປະກອບດ້ວຍ 02 ມາດຕາ, ແນໃສ່ສ້າງຄວາມພ້ອມທາງດ້ານສະຖາບັນ ໃນການຈັດຕັ້ງປະຕິບັດສົນທິສັນຍາດັ່ງກ່າວ. ສົນທິສັນຍາດັ່ງກ່າວຈະມີຜົນບັງຄັບໃຊ້ ພາຍຫຼັງທີ່ 2/3 ຫຼື 108 ປະເທດ ຂອງປະເທດສະມາຊິກ WTO ໄດ້ໃຫ້ສັດຕະຍາບັນ ກ່ຽວກັບການຮັບຮອງເອົາສົນທິສັນຍາ. ສຳລັບປະເທດດ້ອຍພັດທະນາ, ສົນທິສັນຍາດັ່ງກ່າວຈະໄດ້ຮັບການຈັດຕັ້ງປະຕິບັດ ພາຍຫຼັງທີ່ສົນທິສັນຍາມີຜົນບັງຄັບໃຊ້ 01 ປີ. ເນື້ອໃນຂອງການແຈ້ງ ແລະ ການໃຫ້ສັດຕະຍາບັນ ແມ່ນເນັ້ນໃສ່ບັນດາມາດຕາໃນພາກທີ 01 ຂອງສົນທິສັນຍາ.

ສປປ ລາວ ກໍ່ແມ່ນໜຶ່ງໃນບັນດາປະເທດສະມາຊິກ WTO ທີ່ຕ້ອງຈັດຕັ້ງປະຕິບັດສົນທິສັນຍາອຳນວຍຄວາມສະດວກທາງດ້ານການຄ້າ. ບັນດາສະມາຊິກ WTO ທີ່ໄດ້ແຈ້ງໃນໝວດ A[1] ຂອງສົນທິສັນຍາ ຕໍ່ ຄະນະກຳມະການ WTO ປະກອບດ້ວຍ 72 ປະເທດ; ໃນນັ້ນ, ມີພຽງ 12 ປະເທດທີ່ໄດ້ໃຫ້ສັດຕະຍາບັນສົນທິສັນຍາ (ອີງຕາມຂໍ້ມູນຈາກ WTO ໃນວັນທີ 10 ສິງຫາ 2015).[2] ສຳລັບ ສປປ ລາວ, ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ (ກຂອຄ) ໄດ້ຖືກມອບໝາຍໃຫ້ເປັນໜ່ວຍງານຕົ້ນຕໍ ໃນການກະກຽມແຈ້ງບັນດາມາດຕາຂອງສົນທິສັນຍາ. ສຳລັບຂັ້ນຕອນການກະກຽມຈັດຕັ້ງປະຕິບັດສົນທິສັນຍາ, ລັດຖະບານແຫ່ງ ສປປ ລາວ ໄດ້ຮັບຮອງເອົາສົນທິສັນຍາອຳນວຍຄວາມສະດວກທາງດ້ານການຄ້າໃນຂອບຂອງອົງການການຄ້າໂລກ. ພ້ອມນັ້ນ, ກຂອຄ ໄດ້ສຳເລັດການປະເມີນບູລິມະສິດ ແລະ ຄວາມຕ້ອງການຂອງ ສປປ ລາວ ກ່ຽວກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ໂດຍການຈັດບັນດາມາດຕາຂອງສົນທິສັນຍາ ໃນໝວດ A, B, C ຕາມຜົນຂອງກອງປະຊຸມຢູ່ຂັ້ນສູນກາງ ລະຫວ່າງວັນທີ 27-29 ກໍລະກົດ 2015. ບັນດາມາດຕາຂອງສົນທິສັນຍາ ໃນໝວດ

[1] ບັນດາມາດຕາທີ່ຈັດຢູ່ໃນໝວດ A ຂອງສົນທິສັນຍາ ໝາຍເຖິງບັນດາມາດຕາທີ່ສາມາດຈັດຕັ້ງປະຕິບັດໄດ້ເລີຍ ພາຍຫຼັງທີ່ສົນທິສັນຍາມີຜົນບັງຄັບໃຊ້.

[2] ບັນດາປະເທດດັ່ງກ່າວ ມີ ອິດສະຕາລີ, ບອດສະວະນາ, ຮົງກົງ, ຍີ່ປຸ່ນ, ມາເລເຊຍ, ໂມລິເຊີສ, ສິງກະໂປ, ສະຫະລັດອາເມລິກາ, ເກົາຫລີໃຕ້ ເທີນິເດດ & ໂຕບັກໂກ, ນິກາຣາກົວ, ແລະ ໄນເຈີ (ປະເທດດ້ອຍພັດທະນາທຳທີ່ໄດ້ໃຫ້ສັດຕະຍາບັນສົນທິສັນຍາ).

A, B, C ໄດ້ຖືກນຳສະເໜີ ຢູ່ໃນກອງປະຊຸມກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າຄັ້ງທີ IV ເພື່ອຮັບຮອງເອົາຢ່າງເປັນທາງການ ແລ້ວແຈ້ງຕໍ່ຄະນະກຳມະການ WTO ຕາມລຳດັບ. ຫຼັງຈາກນັ້ນ, ກຂອຄ ຈະປະສານງານກັບຂະແໜງການກ່ຽວຂ້ອງ ເພື່ອສ້າງແຜນດຳເນີນງານ ສຳລັບບັນດາມາດຕະການໃນໝວດ B ແລະ C ແລ້ວແຈ້ງໃຫ້ຄະນະກຳມະການ WTO ຕາມກຳນົດເວລາທີ່ລະບຸໄວ້ໃນສັນຍາ ເພື່ອຂໍຄວາມຊ່ວຍທາງດ້ານວິຊາການ ແລະ ການເງິນ.

ບົດລາຍງານສະບັບນີ້ ນຳໃຊ້ຜົນການປະເມີນບູລິມະສິດ ແລະ ຄວາມຕ້ອງການຂອງ ສປປ ລາວ ກ່ຽວກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອວິເຄາະຄວາມພ້ອມຂອງ ສປປ ລາວ. ການວິເຄາະຄວາມພ້ອມຂອງ ສປປ ລາວ ປະກອບດ້ວຍ 02 ຂັ້ນຕອນ ຄື: (1) ວິເຄາະຄວາມພ້ອມຂອງ ສປປ ລາວ ໂດຍອີງໃສ່ 03 ຕົວຊີ້ວັດ ຄື: (1) ນິຕິກຳ, (2) ໂຄງລ່າງພື້ນຖານ, ແລະ (3) ບຸກຄະລາກອນ; (2) ປຽບທຽບຄວາມອາດສາມາດໃນການຈັດຕັ້ງປະຕິບັດບັນດາມາດຕາໃນໝວດ A ຂອງ ສປປ ລາວ ກັບ ບັນດາປະເທດສະມາຊິກອື່ນ ຂອງ WTO. ຜົນການວິເຄາະຄວາມພ້ອມຂອງ ສປປ ລາວ ຈະຊ່ວຍໃຫ້ເຂົ້າໃຈ ປັດໄຈພື້ນຖານທີ່ກຳນົດ ຄວາມອາດສາມາດຂອງ ສປປ ລາວ ໃນການຈັດໝວດບັນດາມາດຕາຂອງສັນຍາ, ຊີ້ໃຫ້ເຫັນຂໍ້ຄົງຄ້າງ ແລະ ວິທີການແກ້ໄຂບັນຫາ, ແນໃສ່ກະກຽມການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າຢ່າງມີປະສິດທິຜົນ.

ສ່ວນທີ່ເຫຼືອຂອງບົດລາຍງານສະບັບນີ້ ມີດັ່ງນີ້. ພາກທີ 2 ອະທິບາຍຂັ້ນຕອນການໃຫ້ສັດຕະຍາບັນ, ການຮັບຮອງເອົາ, ແລະ ການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ທີ່ປະເທດສະມາຊິກ ຕ້ອງແຈ້ງຕໍ່ຄະນະກຳມະການ WTO. ພາກທີ 3 ວິເຄາະຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ. ພາກທີ 4 ສະເໜີໄລຍະເວລາ ສຳລັບ ສປປ ລາວ ໃນການແຈ້ງໝວດ A, B, C ແລະການໃຫ້ສັດຕະຍາບັນສັນຍາ. ພາກທີ 5 ສະຫຼຸບຜົນການປະເມີນຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາ.

# ພາກທີ 2 ການກະກຽມຈັດຕັ້ງປະຕິບັດສັນຍາອໍານວຍຄວາມສະດວກທາງດ້ານການຄ້າ

ເພື່ອເຮັດໃຫ້ສັນຍາອໍານວຍຄວາມສະດວກທາງດ້ານການຄ້າມີຜົນບັງຄັບໃຊ້, ບັນດາປະເທດສະມາຊິກ ຕ້ອງສໍາເລັດ 03 ຂັ້ນຕອນຫຼັກ ຄື: (1) ຂັ້ນຕອນການໃຫ້ສັດຕະຍາບັນ, (2) ຂັ້ນຕອນການຮັບຮອງເອົາ, ແລະ (3) ຂັ້ນຕອນການມີຜົນບັງຄັບໃຊ້ຂອງສັນຍາ (UNCTAD, 2015)[3]. ໃນນັ້ນ, ປະເທດດ້ອຍພັດທະນາ ຕ້ອງປະເມີນຄວາມອາດສາມາດຂອງຕົນໃນການຈັດຕັ້ງປະຕິບັດສັນຍາ ໂດຍແບ່ງອອກເປັນ 03 ໝວດ ຄື: ໝວດ A, B, C (ອີງຕາມມາດຕາ 14 ຂອງສັນຍາ). ໝວດ A ລວມບັນດາມາດຕາທີ່ປະເທດດ້ອຍພັດທະນາຕ້ອງຈັດຕັ້ງປະຕິບັດ ພາຍຫຼັງທີ່ສັນຍາມີຜົນບັງຄັບໃຊ້ 01 ປີ. ໝວດ B ລວມບັນດາມາດຕາ ທີ່ປະເທດດ້ອຍພັດທະນາ ຕ້ອງຈັດຕັ້ງປະຕິບັດ ພາຍຫຼັງໄລຍະເວລາຂ້າມຜ່ານ. ໝວດ C ລວມບັນດາມາດຕາ ທີ່ປະເທດດ້ອຍພັດທະນາຕ້ອງຈັດຕັ້ງປະຕິບັດ ພາຍຫຼັງໄລຍະເວລາຂ້າມຜ່ານ ແລະ ການສ້າງຂີດຄວາມສາມາດໃນການຈັດຕັ້ງປະຕິບັດສັນຍາ ໂດຍຜ່ານການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ.

## 2.1 ຂັ້ນຕອນການໃຫ້ສັດຕະຍາບັນ

ຂັ້ນຕອນການໃຫ້ສັດຕະຍາບັນ ໝາຍເຖິງ ຂັ້ນຕອນການອະນຸມັດພາຍໃນປະເທດ ເຊິ່ງລັດຖະບານຂອງປະເທດສະມາຊິກ WTO ສະແດງເຈດຈໍານົງ ໃນການຮັບຮູ້ສັນຍາທີ່ມີຜົນບັງຄັບທາງດ້ານກົດໝາຍ. ຂັ້ນຕອນດັ່ງກ່າວ ປະກອບດ້ວຍ 04 ບາດກ້າວ ຄື: (1) ການປະເມີນບັນດານິຕິກໍາພາຍໃນປະເທດ ເພື່ອຮັບຮອງເອົາສັນຍາສາກົນ, (2) ການໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບກົນໄກພາຍໃນປະເທດ ໃນການອະນຸມັດອະນຸສັນຍາທີ່ປັບປຸງສັນຍາ WTO, (3) ການອະນຸມັດອະນຸສັນຍາທີ່ປັບປຸງສັນຍາ WTO, ແລະ (4) ການໃຫ້ສັດຕະຍາບັນ. ການປະເມີນບັນດານິຕິກໍາພາຍໃນປະເທດ ເພື່ອຮັບຮອງເອົາສັນຍາສາກົນ ໝາຍເຖິງ ການປະເມີນຊ່ອງວ່າງ ລະຫວ່າງນິຕິກໍາພາຍໃນປະເທດ ແລະ ບັນດາມາດຕາທີ່ລະບຸໄວ້ໃນສັນຍາອໍານວຍຄວາມສະດວກທາງດ້ານການຄ້າ. ການໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບກົນໄກພາຍໃນປະເທດ ໝາຍເຖິງ ການຍື່ນຮ່າງເອກະສານຂອງການໃຫ້ສັດຕະຍາບັນ ແລະ ບົດລາຍງານກ່ຽວກັບຜົນການປະເມີນຜົນກະທົບທາງເສດຖະກິດຂອງສັນຍາ ຕໍ່ຄະນະລັດຖະມົນຕີ, ປະທານປະເທດ ຫຼື ນາຍົກລັດຖະມົນຕີ ເພື່ອອະນຸມັດ. ການອະນຸມັດອະນຸສັນຍາທີ່ປັບປຸງສັນຍາ WTO ໝາຍເຖິງ ການອະນຸມັດເອກະສານຂອງການໃຫ້ສັດຕະຍາບັນ ໂດຍ ຄະນະລັດຖະມົນຕີ, ປະທານປະເທດ ຫຼື ນາຍົກລັດຖະມົນຕີ. ການໃຫ້ສັດຕະຍາບັນ ໝາຍເຖິງ ການສະແດງຄວາມເຫັນດີຂອງປະເທດສະມາຊິກຕໍ່ກັບ ສັນຍາອໍານວຍຄວາມສະດວກທາງດ້ານການຄ້າ. ເອກະສານກ່ຽວກັບກົນໄກຂອງການໃຫ້ສັດຕະຍາບັນ ຕ້ອງມີລາຍເຊັນຂອງຜູ້ຕາງໜ້າປະເທດ ເຊິ່ງອາດຈະເປັນ ປະທານປະເທດ, ນາຍົກລັດຖະມົນຕີ ຫຼື ລັດຖະມົນຕີກະຊວງການຕ່າງປະເທດ.

## 2.2 ຂັ້ນຕອນການຮັບຮອງເອົາສັນຍາອໍານວຍຄວາມສະດວກທາງດ້ານການຄ້າ

ຂັ້ນຕອນການຮັບຮອງເອົາສັນຍາອໍານວຍຄວາມສະດວກທາງດ້ານການຄ້າ ໝາຍເຖິງຂັ້ນຕອນການແຈ້ງເຈດຈໍານົງຂອງລັດຖະບານປະເທດສະມາຊິກ WTO ໃນລະດັບພະຫຸພາຄີ ເພື່ອໃຫ້ປະເທດສະມາຊິກກາຍເປັນຄູ່ສັນຍາ ຂອງສັນຍາອໍານວຍຄວາມສະດວກທາງດ້ານການຄ້າຂອງ WTO. ຂັ້ນຕອນດັ່ງກ່າວ ປະກອບດ້ວຍ 02 ບາດກ້າວ ຄື: (1) ການໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບ ກົນໄກການຮັບຮອງເອົາອະນຸສັນຍາ, (2) ການຍື່ນກົນໄກການຮັບຮອງເອົາອະນຸສັນຍາ ຕໍ່ຄະນະກໍາມະການ WTO. ການໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບ ກົນໄກການຮັບຮອງເອົາອະນຸສັນຍາ ໝາຍເຖິງ ການກະ

[3] UNCTAD. (2015). Steps towards the ratification, acceptance and entry into force of the WTO agreement on trade facilitation. *UNCTAD Techinical Note No. 23*. UNCTAD.

ກຽມເອກະສານ ກ່ຽວກັບ ກົນໄກການຮັບຮອງເອົາອະນຸສັນຍາ ເຊິ່ງເປັນການສະແດງເຈດຈຳນົງຂອງປະເທດສະມາຊິກໜຶ່ງ ໃຫ້ແກ່ ປະເທດສະມາຊິກ WTO ອື່ນຮັບຊາບ ກ່ຽວກັບການເຫັນດີຕໍ່ອະນຸສັນຍາ. ການຍື່ນກົນໄກການຮັບຮອງເອົາອະນຸສັນຍາ ຕໍ່ຄະນະກຳມະການ WTO ໝາຍເຖິງ ການຝາກເອກະສານກ່ຽວກັບ ກົນໄກການຮັບຮອງເອົາອະນຸສັນຍາຂອງປະເທດສະມາຊິກ ໄວ້ນຳພະແນກກົດໝາຍຂອງ WTO.

## 2.3 ຂັ້ນຕອນການມີຜົນບັງຄັບໃຊ້ຂອງອະນຸສັນຍາ ແລະ ສັນຍາອຳນວຍຄວາມສະດວກທາງດ້ານການຄ້າ

ອະນຸສັນຍາ ແລະ ສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ຈະມີຜົນບັງຄັບໃຊ້ ພາຍຫຼັງທີ່ 2/3 ຂອງປະເທດສະມາຊິກ WTO ໄດ້ຮັບຮອງເອົາ, ອີງຕາມມາດຕາ 10.3 ຂອງ ສັນຍາ WTO. ອະນຸສັນຍາ ແລະ ສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ຈະມີຜົນບັງຄັບໃຊ້ ສະເພາະແຕ່ປະເທດສະມາຊິກທີ່ຮັບຮອງເອົາອະນຸສັນຍາ ແລະ ສັນຍາດັ່ງກ່າວ. ສຳລັບປະເທດດ້ອຍພັດທະນາ, ມາດຕາໃນໝວດ A ຂອງສັນຍາ ຈະມີຜົນຕໍ່ປະເທດສະມາຊິກພາຍຫຼັງທີ່ສັນຍາມີຜົນບັງຄັບໃຊ້ 01 ປີ; ມາດຕາໃນໝວດ B ຂອງສັນຍາ ຈະຕ້ອງໄດ້ຮັບການແຈ້ງຢ່າງຊັດເຈນ ກ່ຽວກັບວັນທີໃນການຈັດຕັ້ງປະຕິບັດສັນຍາ ພາຍຫຼັງທີ່ສັນຍາມີຜົນບັງຄັບໃຊ້ 03 ປີ; ມາດຕາໃນໝວດ C ຂອງສັນຍາ ຈະຕ້ອງໄດ້ຮັບການແຈ້ງຢ່າງຊັດເຈນ ກ່ຽວກັບວັນທີໃນການຈັດຕັ້ງປະຕິບັດສັນຍາ ພາຍຫຼັງທີ່ສັນຍາມີຜົນບັງຄັບໃຊ້ 06 ປີ (ຮູບທີ 1).

ຮູບທີ 1: ໄລຍະເວລາຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ສຳລັບປະເທດດ້ອຍພັດທະນາ (LDC)



# ພາກທີ 3 ຄວາມພ້ອມຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ

ຄວາມພ້ອມຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ສາມາດວັດແທກໄດ້ຈາກ ຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາ. ຄວາມອາດສາມາດຂອງ ສປປ ລາວ ສາມາດວັດແທກໄດ້ຈາກການວິເຄາະ 02 ຂັ້ນຕອນ ຄື: (1) ການປຽບທຽບຜົນການປະເມີນລະຫວ່າງ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ; (2) ການປຽບທຽບຜົນການປະເມີນຂອງ ສປປ ລາວ ໃນຂອບເຂດທົ່ວປະເທດ ກັບ ບັນດາປະເທດສະມາຊິກອາຊຽນ ໂດຍສະເພາະກັບປະເທດທາງຜ່ານທາງດ້ານການຄ້າຂອງ ສປປ ລາວ ແລະ ບັນດາປະເທດດ້ອຍພັດທະນາ. ເປົ້າໝາຍຂອງການປຽບທຽບຜົນການປະເມີນລະຫວ່າງ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ແມ່ນເພື່ອກວດກາຄືນຄວາມສອດຄ່ອງໃນການຈັດຕັ້ງປະຕິບັດບັນດາມາດຕາຂອງສັນຍາ ຢູ່ຂັ້ນທ້ອງຖິ່ນ ພາຍໃຕ້ການຊີ້ນຳຂອງຂັ້ນສູນກາງ. ເປົ້າໝາຍຂອງການປຽບທຽບຜົນການປະເມີນລະຫວ່າງ ສປປ ລາວ ກັບ ບັນດາປະເທດທາງຜ່ານທາງດ້ານການຄ້າຂອງ ສປປ ລາວ ແລະ ບັນດາປະເທດດ້ອຍພັດທະນາ ແມ່ນເພື່ອກຳນົດຈຸດຢືນຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ.

## 3.1 ຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ໃນຂອບເຂດທົ່ວປະເທດ

ຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ໃນຂອບເຂດທົ່ວປະເທດ ໄດ້ຮັບການປະເມີນ ໂດຍອີງໃສ່ 3 ທັດສະນະ ຄື: (1) ມາດຕະຖານສາກົນຂອງການອຳນວຍຄວາມສະດວກທາງດ້ານການຄ້າ ເຊິ່ງຖືກສັງລວມໄວ້ຢູ່ໃນເນື້ອໃນຂອງສັນຍາ, (2) ຈຸດຢືນຂອງຜູ້ວາງແຜນນະໂຍບາຍອຳນວຍຄວາມສະດວກທາງດ້ານການຄ້າ ເຊິ່ງຖືກສັງລວມໄວ້ຢູ່ໃນຜົນການປະເມີນຂັ້ນສູນກາງ, ແລະ (3) ສະພາບຄວາມເປັນຈິງຂອງການອຳນວຍຄວາມສະດວກທາງດ້ານການຄ້າ ເຊິ່ງໄດ້ມາຈາກການປະກອບຄຳເຫັນຂອງບັນດາຂະແໜງການຢູ່ຂັ້ນທ້ອງຖິ່ນ. ການວິເຄາະແບບປຽບທຽບລະຫວ່າງ 3 ທັດສະນະດັ່ງກ່າວ ເປັນໄມ້ຫຼາວັດແທກອັນສຳຄັນໃນການປະເມີນຄວາມຕ້ອງການ ແລະ ບູລິມະສິດ ສຳລັບການຈັດໝວດ A, B, C ຂອງ ສປປ ລາວ ຕໍ່ກັບ ສັນຍາອານວຍຄວາມສະດວກທາງດ້ານການຄ້າ.

ການວິເຄາະແບບປຽບທຽບ ປະກອບດ້ວຍ 2 ຂັ້ນຕອນ. ຂັ້ນຕອນທີ 1 ແມ່ນການປຽບທຽບຜົນການປະເມີນຄວາມຕ້ອງການ ແລະ ບູລິມະສິດຂອງວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ຂັ້ນສູນກາງ ປີ 2015 ກັບຜົນການປະເມີນຢູ່ຂັ້ນສູນກາງ ປີ 2013 ແລະ ຂັ້ນທ້ອງຖິ່ນ ປີ 2015 ເພື່ອຊີ້ໃຫ້ເຫັນຄວາມແຕກຕ່າງ ແລະ ຄ້າຍຄືກັນລະຫວ່າງ ທັດສະນະຂອງຜູ້ວາງແຜນນະໂຍບາຍ (ຜົນການປະເມີນຢູ່ຂັ້ນສູນກາງ), ຄວາມຄືບໜ້າຂອງວຽກງານອຳນວຍຄວາມສະດວກທາງດ້ານການຄ້າໃນໄລຍະ 02 ປີ ຜ່ານມາ (2013-2015), ແລະ ທັດສະນະຂອງຜູ້ຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ (ຜົນການປະເມີນຢູ່ຂັ້ນທ້ອງຖິ່ນ), ແນໃສ່ສະຫຼຸບຜົນການປະເມີນໃນຂອບເຂດທົ່ວປະເທດ. ຂັ້ນຕອນທີ 2 ແມ່ນການວິເຄາະຕົວກຳນົດຄວາມພ້ອມ ແລະ ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ.

### 3.1.1 ຜົນການປະເມີນຄວາມຕ້ອງການ ແລະ ບູລິມະສິດຂອງ ສປປ ລາວ ກ່ຽວກັບ ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ

ກອງປະຊຸມປະເມີນຄວາມຕ້ອງການ ແລະ ບູລິມະສິດຂອງ ສປປ ລາວ ກ່ຽວກັບ ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ຖືກຈັດຂຶ້ນທັງໝົດ 04 ຄັ້ງ ຄື: ຄັ້ງທີ 1 ໄດ້ຖືກຈັດຂຶ້ນຢູ່ນະຄອນຫຼວງວຽງຈັນ ລະຫວ່າງວັນທີ 14-18 ຕຸລາ 2013 (ການນຳສະເໜີຕໍ່ໄປ ຈະເອີ້ນວ່າ ຜົນການປະເມີນຢູ່ຂັ້ນສູນກາງ (2013)); ຄັ້ງທີ 2 ໄດ້ຖືກຈັດຂຶ້ນຢູ່ ສະຫວັນນະເຂດ ລະຫວ່າງວັນທີ 27-29 ເມສາ 2015 (ການນຳສະເໜີຕໍ່ໄປ ຈະເອີ້ນວ່າ ຜົນການປະເມີນຢູ່ຂັ້ນທ້ອງຖິ່ນ (2015)); ຄັ້ງທີ 3 ໄດ້ຖືກຈັດຂຶ້ນຢູ່ ຫຼວງພະບາງ ຄັ້ງວັນທີ 15-16 ມີຖຸນາ 2015 (ການນຳສະເໜີຕໍ່ໄປ ຈະເອີ້ນວ່າ ຜົນການປະເມີນຢູ່ຂັ້ນທ້ອງຖິ່ນ (2015)); ຄັ້ງທີ 4 ໄດ້ຖືກຈັດຂຶ້ນຢູ່ນະຄອນຫຼວງວຽງຈັນ ລະຫວ່າງ ວັນທີ 27-29 ກໍລະກົດ 2015 (ການນຳສະເໜີຕໍ່ໄປ ຈະເອີ້ນວ່າ ຜົນການປະເມີນຢູ່ຂັ້ນສູນກາງ (2015)). ບົດລາຍງານ ສະບັບນີ້ ສະຫຼຸບຜົນການປະເມີນຄວາມຕ້ອງການ ແລະ ບູລິມະສິດຂອງ ສປປ ລາວ ກ່ຽວກັບ ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ໂດຍອີງໃສ່ຜົນການປະເມີນຢູ່ຂັ້ນສູນກາງ (2015). ນອກນັ້ນ, ບົດລາຍງານສະບັບນີ້ ອ້າງອີງເຖິງ ບັນດາມາດຕາຍ່ອຍຂອງສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ດ້ວຍຄຳວ່າ “ມາດຕະການ”.

ຜົນການປະເມີນຢູ່ຂັ້ນສູນກາງ (2015) ໄດ້ປະເມີນຄືນ 12 ມາດຕາຂອງສັນຍາ ເຊິ່ງປະກອບດ້ວຍ 36 ມາດຕະການ ແລະ ໄດ້ສະຫຼຸບຜົນການປະເມີນ ໂດຍຈັດ 13 ມາດຕະການ ໃນໝວດ A, 7 ມາດຕະການ ໃນໝວດ B, ແລະ 16 ມາດຕະການ ໃນໝວດ C. ຜົນຂອງກອງປະຊຸມຄັ້ງນີ້ ໄດ້ເຮັດໃຫ້ມີການເຄື່ອນຍ້າຍບາງມາດຕາຂອງສັນຍາ ທີ່ຈັດຢູ່ໃນໝວດ A, B, C ຂອງຜົນການປະເມີນຢູ່ຂັ້ນສູນກາງ (2013) ແລະ ຂັ້ນທ້ອງຖິ່ນ (2015) (ຕາຕະລາງທີ 1).

ຜົນການປະເມີນຢູ່ຂັ້ນສູນກາງ (2013) ໄດ້ຈັດ 17 ມາດຕະການ ໃນໝວດ A, 8 ມາດຕະການ ໃນໝວດ B, ແລະ 10 ມາດຕະການ ໃນໝວດ C. ຜູ້ເຂົ້າຮ່ວມ ໃນການປະເມີນດັ່ງກ່າວ ສ່ວນຫຼາຍເປັນຜູ້ວາງແຜນນະໂຍບາຍທີ່ຕິດພັນກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ເຊິ່ງມາຈາກ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຄົມມະນາຄົມ ແລະ ຂົນສົ່ງ, ກະຊວງ ສາທາລະນະສຸກ, ຫ້ອງວ່າການລັດທະບານ, ພາກທຸລະກິດ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ. ກອງປະຊຸມໄດ້ປະເມີນ 36 ມາດຕະການຂອງສັນຍາ ຊຶ່ງຜົນການຂອງການປະເມີນ ໄດ້ຊີ້ໃຫ້ເຫັນວ່າ: ໝວດ A ປະກອບດ້ວຍ 17 ມາດຕະການ ຫຼື 47% ຂອງມາດຕະການທັງໝົດ; ໝວດ B ປະກອບດ້ວຍ 8 ມາດຕະການ ຫຼື 22% ຂອງມາດຕະການທັງໝົດ; ໝວດ C ປະກອບດ້ວຍ 10 ມາດຕະການ ຫຼື 28% ຂອງມາດຕະການທັງໝົດ.

ຜົນການປະເມີນຢູ່ຂັ້ນທ້ອງຖິ່ນ (2015) ໄດ້ຈັດ 11 ມາດຕະການ ໃນໝວດ A, 12 ມາດຕະການ ໃນໝວດ B, ແລະ 13 ມາດຕະການ ໃນໝວດ C. ຜົນຂອງການປະເມີນຢູ່ຂັ້ນທ້ອງຖິ່ນ ສະແດງໃຫ້ເຫັນວ່າ ບາງມາດຕາທີ່ຈັດຢູ່ໃນໝວດ A ຂອງຂັ້ນສູນກາງ ແມ່ນຍັງບໍ່ທັນແທດເໝາະກັບສະພາບການຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກຢູ່ຂັ້ນທ້ອງຖິ່ນ ເຊັ່ນ: ມາດຕາ 2 ວ່າດ້ວຍ ໂອກາດໃນການປະກອບຄຳເຫັນ, ຂໍ້ມູນກ່ອນມີຜົນບັງຄັບໃຊ້ ແລະ ການປຶກສາຫາລື ຍັງບໍ່ທັນສາມາດຈັດຕັ້ງປະຕິບັດໄດ້ຢ່າງເຕັມສ່ວນ ເນື່ອງຈາກວ່າ ການອອກບາງນິຕິກຳຂອງພາກລັດ ຢູ່ບາງແຂວງທາງພາກເໜືອ ຍັງຂາດການປຶກສາຫາລື ກັບພາກທຸລະກິດ; ມາດຕະການ 10.7 ແມ່ນການຂາດລະບົບອີເລັກໂທຣນິກ ແລະ ຂາດພະນັກງານວິຊາການ ໃນບັນດາຂະແໜງການທີ່ຕິດພັນກັບການນຳເຂົ້າ-ສົ່ງອອກ; ມາດຕະການ 7.6 ກ່ຽວກັບ ການສ້າງຕັ້ງ ແລະ ພິມເຜີຍແຜ່ໄລຍະເວລາສະເລ່ຍໃນການປ່ອຍສິນຄ້າ (Time Release Study) ແມ່ນຍັງບໍ່ສາມາດຈັດຕັ້ງປະຕິບັດດ້ວຍຕົນເອງ ໄດ້ຢ່າງເຕັມສ່ວນ ເນື່ອງຈາກວ່າ ການເຮັດບົດສຳຫຼວດການກວດປ່ອຍສິນຄ້າໄລຍະຜ່ານມາ ແມ່ນອີງໃສ່ການຈັດຈ້າງຊ່ຽວຊານຈາກຕ່າງປະເທດ ພາຍໃຕ້ການສະໜັບສະໜູນທາງດ້ານການເງິນຂອງທະນາຄານໂລກ ແລະ ທະນາຄານພັດທະນາອາຊີ.

ຜົນການປະເມີນຢູ່ຂັ້ນສູນກາງ (2015) ຈັດ 13 ມາດຕະການ ໃນໝວດ A ເຊິ່ງຕໍ່າກວ່າຜົນການປະເມີນໝວດ A ຢູ່ຂັ້ນສູນກາງ (2013) ຈໍານວນ 04 ມາດຕະການ ແລະ ສູງກວ່າຜົນການປະເມີນ ໝວດ A ຢູ່ຂັ້ນທ້ອງຖິ່ນ (2015) ຈໍານວນ 02 ມາດຕະການ. ໝວດ A ຂອງຂັ້ນສູນກາງ (2015) ປະກອບດ້ວຍ ມາດຕະການ 1.1-1.4, 4, 5.1, 5.2, 6.2, 7.1, 9, 10.5, 10.6, 10.9. ໃນນັ້ນ, 09 ມາດຕະການ (ມາດຕະການ 1.1-1.4, 4, 5.2, 9, 10.6, 10.9) ແມ່ນສອດຄ່ອງກັບຜົນການປະເມີນໝວດ A ຢູ່ຂັ້ນສູນກາງ (2013) ແລະ ຂັ້ນທ້ອງຖິ່ນ (2015); 03 ມາດຕະການ (ມາດຕະການ 6.2, 7.1, 10.5) ແມ່ນສອດຄ່ອງສະເພາະ ແຕ່ຜົນການປະເມີນໝວດ A ຢູ່ຂັ້ນສູນກາງ (2013); ແລະ 01 ມາດຕະການ (ມາດຕະການ 5.1) ແມ່ນຍ້າຍມາຈາກ ໝວດ B ຂອງຜົນການປະເມີນຢູ່ຂັ້ນສູນກາງ (2013) ແລະ ຂັ້ນທ້ອງຖິ່ນ (2015). ອີງຕາມການຢັ້ງຢືນຈາກ ຜູ້ເຂົ້າຮ່ວມ ຈາກຂະແໜງສາທາລະນະສຸກ ແລະ ຂະແໜງກະສິກໍາ ແລະ ປ່າໄມ້ ໃນກອງປະຊຸມຂັ້ນສູນກາງປີ 2015, ມາດຕະການ 5.1 ຄວນຈັດຢູ່ໃນໝວດ A ຍ້ອນວ່າ ບັນດາແຈ້ງການສໍາລັບການຄວບຄຸມທີ່ເພີ່ມຂຶ້ນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບ, ທັນກັບສະພາບການ ແລະ ມີກໍານົດເວລາທີ່ແນ່ນອນໃນການຈັດຕັ້ງປະຕິບັດ ແລະ ການຍົກເລີກແຈ້ງການ ໂດຍອີງຕາມລະດັບຄວາມສ່ຽງຂອງແຕ່ລະບັນຫາ.

ຕາຕະລາງທີ 1: ສົມທຽບຜົນການປະເມີນສັນຍາອໍານວຍຄວາມສະດວກທາງດ້ານການຄ້າ ຢູ່ຂັ້ນສູນກາງ (2013, 2015) ແລະ ຂັ້ນທ້ອງຖິ່ນ (2015)

| ມາດຕາ | | ສູນກາງ (2013) | ທ້ອງຖິ່ນ (2015) | ສູນກາງ (2015) ຮັບຮອງຄັ້ງວັນທີ 18/8/2015 |
|---|---|---|---|---|
| 1.1 | Publication | A | A | A |
| 1.2 | Information available through internet | A | A | A |
| 1.3 | Enquiry points | A | A | A |
| 1.4 | Notification | A | A | A |
| 2.1 | Opportunity to comment and information before entry into force | A | B | B |
| 2.2 | Consultations | A | B | B |
| 3 | Advance rulings | C | C | C |
| 4 | Procedures for appeal or review | A | A | A |
| 5.1 | Notifications for enhanced controls or inspections | B | B | A |
| 5.2 | Detention | A | A | A |
| 5.3 | Test procedures | C | C | C |
| 6.1 | General disciplines on fees and charges imposed on or in connection with importation and exportation and penalties | B | B | B |
| 6.2 | Specific disciplines on fees and charges for customs processing imposed on or in connection with importation and exportation | A | B | A |
| 6.3 | Penalty disciplines | B | B | B |
| 7.1 | Pre-arrival processing | A | B | A |
| 7.2 | Electronic payment | C | C | B |
| 7.3 | Separation of release from final determination of customs duties, taxes, fees and charges | A | A | B |
| 7.4 | Risk management | B | B | C |
| 7.5 | Post-clearance audit | B | B | C |

| | | | | |
|---|---|---|---|---|
| 7.6 | Establishment and publication of average release times | A | A | C |
| 7.7 | Trade facilitation measures for authorized operators | Non-compliant | C | C |
| 7.8 | Expedited shipments | B | B | C |
| 7.9 | Perishable goods | C | C | B |
| 8 | Border agency cooperation | C | C | C |
| 9 | Movement of goods intended for import under customs control | A | A | A |
| 10.1 | Formalities and documentation requirements | C | C | C |
| 10.2 | Acceptance of copies | C | C | C |
| 10.3 | Use of international standards | C | C | C |
| 10.4 | Single window | C | C | C |
| 10.5 | Preshipment inspection | A | B | A |
| 10.6 | Use of customs brokers | A | A | A |
| 10.7 | Common border procedures and uniform documentation requirements | A | B | C |
| 10.8 | Rejected goods | C | C | C |
| 10.9 | Temporary admission of goods and inward and outward processing | A | A | A |
| 11 | Freedom of transit | B | C | C |
| 12 | Customs cooperation | B | C | C |
| *ລວມມາດຕະການທັງໝົດທີ່ຖືກປະເມີນ* | | **36** | **36** | **36** |
| *ໝວດ A* | | ***17*** | ***11*** | ***13*** |
| *ໝວດ B* | | ***8*** | ***12*** | ***7*** |
| *ໝວດ C* | | ***10*** | ***13*** | ***16*** |
| Non-compliant | | ***1*** | ***0*** | ***0*** |

*ແຫຼ່ງຂໍ້ມູນ*: ຮວບຮວມຈາກ ບົດສະຫຼຸບຜົນການປະເມີນຄວາມຕ້ອງການ ແລະ ບູລິມະສິດ ຂອງວຽກງານອຳນວຍຄວາມສະດວກທາງດ້ານການຄ້າຂອງ ສປປ ລາວ ຢູ່ທີ່ ນະຄອນຫຼວງວຽງຈັນ 14-18 ຕຸລາ 2013, ພາກກາງ ແລະ ພາກໃຕ້ ຢູ່ ສະຫວັນນະເຂດ ຄັ້ງວັນທີ 27-29 ເມສາ 2015, ແລະ ພາກເໜືອ ຢູ່ ຫຼວງພະບາງ ຄັ້ງວັນທີ 15-16 ມີຖຸນາ 2015 ແລະ ສະຫຼຸບຜົນການປຶກສາຫາລືກັບຂະແໜງການ ກ່ຽວຂ້ອງຂັ້ນສູນກາງຄັ້ງວັນທີ 27-29 ກໍລະກົດ 2015.

ຜົນການປະເມີນຢູ່ຂັ້ນສູນກາງ (2015) ຈັດ 07 ມາດຕະການ ໃນໝວດ B ເຊິ່ງຕໍ່າກວ່າຜົນການປະເມີນໝວດ B ຢູ່ຂັ້ນສູນກາງ (2013) ຈຳນວນ 01 ມາດຕະການ ແລະ ຕໍ່າກວ່າຜົນການປະເມີນໝວດ B ຢູ່ຂັ້ນທ້ອງຖິ່ນ (2015) ຈຳນວນ 05 ມາດຕະການ. ໃນນັ້ນ, 04 ມາດຕະການ (ມາດຕະການ 2.1, 2.2, 6.1, 6.3) ແມ່ນສອດຄ່ອງກັບຜົນການປະເມີນໝວດ B ຢູ່ຂັ້ນສູນກາງ (2013) ແລະ ຂັ້ນທ້ອງຖິ່ນ (2015); 01 ມາດຕະການ (ມາດຕະການ 7.3) ແມ່ນຍ້າຍມາຈາກ ຜົນການປະເມີນໝວດ A ຢູ່ຂັ້ນສູນກາງ (2013) ແລະ ຂັ້ນທ້ອງຖິ່ນ (2015); 02 ມາດຕະການ (ມາດຕະການ 7.2, 7.9) ແມ່ນຍ້າຍມາຈາກ ຜົນການປະເມີນໝວດ C ຢູ່ຂັ້ນສູນກາງ (2013) ແລະ ຂັ້ນທ້ອງຖິ່ນ (2015).

ເຫດຜົນສຳລັບການຍ້າຍມາດຕະການ 7.3 ແມ່ນຍ້ອນຄວາມບໍ່ສອດຄ່ອງຂອງກົດໝາຍພາສີ ກັບ ສັນຍາອຳນວຍຄວາມສະດວກທາງດ້ານການຄ້າ. ມາດຕາ 27 ຂອງ ກົດໝາຍ ວ່າດ້ວຍ ພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011 ໄດ້ກຳນົດໃຫ້ຜູ້ແຈ້ງພາສີ ຈ່າຍເງິນຄໍ້າປະກັນ 120% ຂອງມູນຄ່າພາສີ ແລະ ພັນທະອື່ນ ເພື່ອນຳເອົາສິນຄ້າ, ເຄື່ອງຂອງອອກຈາກດ່ານພາສີ ຫຼື ສາງ ກ່ອນການແຈ້ງພາສີເປັນລາຍລະອຽດ. ມູນຄ່າການຄໍ້າປະກັນດັ່ງກ່າວ ຂັດກັບມາດຕະການ 7.3 ຂອງສັນຍາ ເຊິ່ງໄດ້ລະບຸວ່າ ມູນຄ່າຄໍ້າປະກັນ ຕ້ອງບໍ່ເກີນມູນຄ່າພາສີ ແລະ ພັນທະອື່ນ. ສະນັ້ນ, ຂະແໜງພາສີ ຈິ່ງຂໍເວລາ ເພື່ອປັບປຸງມາດຕາ 27 ຂອງ ກົດໝາຍ ວ່າດ້ວຍ ພາສີ ໃຫ້ສອດຄ່ອງກັບເນື້ອໃນສັນຍາ. ເຫດຜົນສຳລັບ

ການຈັດມາດຕະການ 7.2 ໃນໝວດ B ແມ່ນຍ້ອນຄວາມຄືບໜ້າຂອງການກະກຽມນຳໃຊ້ລະບົບອີເລັກໂທຣນິກ ຢູ່ບັນດາດ່ານສາກົນ ເຊັ່ນ: ລະບົບ ASYCUDA ໄດ້ຮັບການຕິດຕັ້ງ ຢູ່ທຸກດ່ານສາກົນຂອງ ສປປ ລາວ, ລະບົບບໍລິການແຈ້ງພາສີປະຕູດຽວແຫ່ງຊາດ ກຳລັງຈະຖືກນຳໃຊ້ໃນປີ 2016. ເຫດຜົນສຳລັບການຈັດມາດຕະການ 7.9 ໃນໝວດ B ແມ່ນຍ້ອນ ຂະແໜງພາສີ ແລະ ຂະແໜງການກະສິກຳ ແລະ ປ່າໄມ້ ສາມາດຈັດຕັ້ງປະຕິບັດຕົວຈິງໄດ້ສ່ວນຫຼາຍ ໃນການຈັດບູລິມະສິດ ສຳລັບການກວດກາ ແລະ ປ່ອຍສິນຄ້າທີ່ເນົ່າເປື່ອຍໄວ ທັງໃນໂມງການ ແລະ ນອກໂມງການ (ອັນເສີາ).

ຜົນການປະເມີນຢູ່ຂັ້ນສູນກາງ (2015) ຈັດ 16 ມາດຕະການ ໃນໝວດ C ເຊິ່ງສູງກວ່າຜົນການປະເມີນໝວດ C ຢູ່ຂັ້ນສູນກາງ (2013) ຈຳນວນ 06 ມາດຕະການ ແລະ ສູງກວ່າຜົນການປະເມີນໝວດ C ຢູ່ຂັ້ນທ້ອງຖິ່ນ (2015) ຈຳນວນ 03 ມາດຕະການ. ໃນນັ້ນ, 11 ມາດຕະການ (ມາດຕະການ 3, 5.3, 7.7, 8, 10.1-10.4, 10.8, 11, 12) ແມ່ນສອດຄ່ອງກັບຜົນການປະເມີນໝວດ C ຢູ່ຂັ້ນສູນກາງ (2013) ແລະ ຂັ້ນທ້ອງຖິ່ນ (2015); 02 ມາດຕະການ (ມາດຕະການ 7.6, 10.7) ແມ່ນຍ້າຍມາຈາກ ໝວດ A ຂອງຜົນການປະເມີນຢູ່ຂັ້ນສູນກາງ (2013); 03 ມາດຕະການ ແມ່ນຍ້າຍມາຈາກ ຜົນການປະເມີນໝວດ B ຢູ່ຂັ້ນສູນກາງ (2013) ແລະ ຂັ້ນທ້ອງ (2015).

ເຫດຜົນສຳລັບການຍ້າຍມາດຕະການ 7.6 ແມ່ນຍ້ອນຄວາມບໍ່ຍືນຍົງໃນການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ. ໄລຍະຜ່ານມາ ຂະແໜງພາສີ ໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ ຈາກທະນາຄານໂລກ, ທະນາຄານພັດທະນາອາຊີ ແລະ ພາສີຍີ່ປຸ່ນ ເພື່ອຈັດຈ້າງບໍລິສັດເອກະຊົນ ແລະ ຊ່ຽວຊານຈາກອົງການສາກົນ. ສະນັ້ນ, ຂະແໜງພາສີ ຈຶ່ງຂໍຄວາມຊ່ວຍເຫຼືອທັງທາງດ້ານວິຊາການ ແລະ ດ້ານການເງິນ ເພື່ອພັດທະນາບຸກຄະກອນພາຍໃນ, ແນໃສ່ຮັບປະກັນຄວາມຍືນຍົງຂອງວຽກງານການສຳຫຼວດ ແລະ ຈັດພິມຂໍ້ມູນດັ່ງກ່າວ. ເຫດຜົນສຳລັບການຍ້າຍມາດຕະການ 7.4-7.5 ແລະ 7.8 ແມ່ນຍ້ອນ ການຂາດບຸກຄະລາກອນທີ່ມີທັກສະ ເພື່ອຮັບໃຊ້ວຽກງານດັ່ງກ່າວ.

### 3.1.2 ຕົວກຳນົດຄວາມພ້ອມ ແລະ ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ

ການວິເຄາະຄວາມພ້ອມຂອງ ສປປ ລາວ ແມ່ນອີງໃສ່ 03 ຕົວຊີ້ວັດ ຄື: ນິຕິກຳ, ໂຄງລ່າງພື້ນຖານ, ແລະ ບຸກຄະລາກອນ ທີ່ຕິດພັນກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ.

<u>**ໝວດ A:**</u>

ໝວດ A ປະກອບດ້ວຍ 13 ມາດຕະການ (ຕາຕະລາງທີ 2). ຜົນການປະເມີນບັນດາມາດຕະການ ໃນໝວດ A ຂອງ ສັນຍາ ໂດຍອີງໃສ່ບັນດາຕົວຊີ້ວັດດັ່ງກ່າວ ໄດ້ຖືກສະແດງໄວ້ໃນເອກະສານຊ້ອນທ້າຍ, ຕາຕະລາງ A.1. ນິຕິກຳທີ່ເປັນພື້ນຖານແກ່ການຈັດຕັ້ງປະຕິບັດສັນຍາ ປະກອບດ້ວຍ ກົດໝາຍ 03 ສະບັບ ຄື: (1) ກົດໝາຍ ວ່າດ້ວຍພາສີ ເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011; (2) ກົດໝາຍ ວ່າດ້ວຍ ອາຫານ ເລກທີ 33/ສພຊ, ລົງວັນທີ 20 ສິງຫາ 2013; ແລະ (3) ກົດໝາຍ ວ່າດ້ວຍ ການປ້ອງກັນພືດ ເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008.

ໂຄງລ່າງພື້ນຖານໃນການຈັດຕັ້ງປະຕິບັດສັນຍາ ປະກອບດ້ວຍ ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ແລະ ລະບົບອາຊີກຸດາ. ຂະແໜງການທີ່ຮັບຜິດຊອບໂຄງລ່າງພື້ນຖານດັ່ງກ່າວ ປະກອບດ້ວຍ 04 ຂະແໜງການຫຼັກ ຄື: (1) ຂະແໜງການເງິນ (ກົມພາສີ, ກະຊວງການເງິນ), (2) ຂະແໜງການຄ້າ (ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ), (3) ຂະແໜງກະສິກຳ ແລະ ປ່າໄມ້, ແລະ (4) ຂະແໜງສາທາລະນະສຸກ. ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ (ກຂອຄ) ເຊິ່ງມີທີ່ຕັ້ງຢູ່ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າທີ່ເຮັດໜ້າທີ່ເປັນຈຸດປະສານງານລະຫວ່າງຂະແໜງການກ່ຽວຂ້ອງ ທີ່ຕິດພັນກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ. ໃນນັ້ນ, ກຂອຄ ໄດ້ສ້າງຕັ້ງ ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ເພື່ອເຜີຍແຜ່ຂໍ້ມູນຂ່າວສານທາງດ້ານການຄ້າ ຜ່ານທາງອິນເຕີເນັດ.

ບຸກຄະລາກອນສຳລັບການຈັດຕັ້ງປະຕິບັດສັນຍາ ປະກອບດ້ວຍ 03 ພາກສ່ວນຕົ້ນຕໍ ຄື: (1) ສະມາຊິກ ກຂອຄ; (2) ເຈົ້າໜ້າທີ່ພາສີ, ກະຊວງການເງິນ; (3) ເຈົ້າໜ້າທີ່ປ້ອງກັນພືດ ແລະ ສັດ, ກະຊວງກະສິກຳ ແລະ ປ່າໄມ້.

ຕາຕະລາງທີ 2: ບັນດາມາດຕະການຂອງສັນຍາ ທີ່ຈັດໃນໝວດ A

| ໝວດ A: 13 ມາດຕະການ | |
|---|---|
| 1.1 | Publication |
| 1.2 | Information available through internet |
| 1.3 | Enquiry points |
| 1.4 | Notification |
| 4 | Procedures for appeal or review |
| 5.1 | Notifications for enhanced controls or inspections |
| 5.2 | Detention |
| 6.2 | Specific disciplines on fees and charges for customs processing imposed on or in connection with importation and exportation |
| 7.1 | Pre-arrival processing |
| 9 | Movement of goods intended for import under customs control |
| 10.5 | Pre-shipment inspection |
| 10.6 | Use of customs brokers |
| 10.9 | Temporary admission of goods and inward and outward processing |

*ແຫຼ່ງຂໍ້ມູນ:* ຮອບຮວມຈາກ ຜົນການປະເມີນຄວາມຕ້ອງການ ແລະ ບູລິມະສິດ ກ່ຽວກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ ຂົ້ນສູນກາງ ຄັ້ງວັນທີ 27-29 ກໍລະກົດ 2015.

## <u>ໝວດ B:</u>

ໝວດ B ປະກອບດ້ວຍ 07 ມາດຕະການ (ຕາຕະລາງທີ 3). ອີງຕາມຜົນການປະເມີນບັນດາມາດຕະການໃນໝວດ B ຂອງສັນຍາ ໂດຍອີງໃສ່ບັນດາຕົວຊີ້ວັດທາງດ້ານນິຕິກຳ, ໂຄງລ່າງພື້ນຖານ, ແລະ ບຸກຄະລາກອນ (ເອກະສານຊ້ອນທ້າຍ, ຕາຕະລາງ A.2), ຂໍ້ຄົງຄ້າງໃນໝວດ B ປະກອບດ້ວຍ: (1) ຄວາມເປັນເອກະພາບໃນການປະຕິບັດນິຕິກຳ ແລະ (2) ລະດັບຄວາມຮູ້ຂອງເຈົ້າໜ້າທີ່ປະຈຳດ່ານໃນການບໍລິຫານຄວາມສ່ຽງ ແລະ ການກວດກາສິນຄ້າ.

ຕາຕະລາງທີ 3: ບັນດາມາດຕະການຂອງສັນຍາ ທີ່ຈັດໃນໝວດ B

| ໝວດ B: 07 ມາດຕະການ | |
|---|---|
| 2.1 | Opportunity to comment and information before entry into force |
| 2.2 | Consultations |
| 6.1 | General disciplines on fees and charges imposed on or in connection with importation and exportation |
| 6.3 | Penalty disciplines |
| 7.2 | Electronic payment |
| 7.3 | Separation of release from final determination of customs duties, taxes, fees and charges |
| 7.9 | Perishable goods |

*ແຫຼ່ງຂໍ້ມູນ:* ຮອບຮວມຈາກ ຜົນການປະເມີນຄວາມຕ້ອງການ ແລະ ບູລິມະສິດ ກ່ຽວກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ ຂັ້ນສູນກາງຄັ້ງວັນທີ 27-29 ກໍລະກົດ 2015.

**<u>ໝວດ C:</u>**

ໝວດ C ປະກອບດ້ວຍ 16 ມາດຕະການ ເຊິ່ງຖືກສະແດງໄວ້ໃນ ຕາຕະລາງທີ 4. ອີງຕາມຜົນການປະເມີນບັນດາມາດຕະການໃນ ໝວດ B ຂອງສັນຍາ ໂດຍອີງໃສ່ບັນດາຕົວຊີ້ວັດທາງດ້ານນິຕິກຳ, ໂຄງລ່າງພື້ນຖານ, ແລະ ບຸກຄະລາກອນ (ເອກະສານຊ້ອນທ້າຍ, ຕາຕະລາງ A.3), ຂໍ້ຄົງຄ້າງໃນໝວດ C ປະກອບດ້ວຍ: (1) ໂຄງລ່າງພື້ນຖານໃນການອຳນວຍຄວາມສະດວກທາງດ້ານການຄ້າ ແລະ (2) ລະດັບຄວາມຮູ້ຂອງບຸກຄະລາກອນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

ຕາຕະລາງທີ 4: ບັນດາມາດຕະການຂອງສັນຍາ ທີ່ຈັດໃນໝວດ C

| ໝວດ C: 16 ມາດຕະການ | |
|---|---|
| 3 | Advance rulings |
| 5.3 | Test procedures |
| 7.4 | Risk management |
| 7.5 | Post-clearance audit |
| 7.6 | Establishment and publication of average release times |
| 7.7 | Trade facilitation measures for authorized operators |
| 7.8 | Expedited shipments |
| 8 | Border agency cooperation |
| 10.1 | Formalities and documentation requirements |
| 10.2 | Acceptance of copies |
| 10.3 | Use of international standards |
| 10.4 | Single window |
| 10.7 | Common border procedures and uniform documentation requirements |
| 10.8 | Rejected goods |
| 11 | Freedom of transit |
| 12 | Customs cooperation |

*ແຫຼ່ງຂໍ້ມູນ:* ຮອບຮອມຈາກ ຜົນການປະເມີນຄວາມຕ້ອງການ ແລະ ບູລິມະສິດ ກ່ຽວກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຢູ່ ຂັ້ນສູນກາງຄັ້ງວັນທີ 27-29 ກໍລະກົດ 2015.

## 3.2 ຄວາມສາມາດຂອງ ສປປ ລາວ ທຽບກັບບັນດາປະເທດສະມາຊິກອາຊຽນ ແລະ ປະເທດດ້ອຍພັດທະນາ

ຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ຂອງອົງການການຄ້າໂລກ ແມ່ນຕ່ຳກວ່າບັນດາປະເທດ ສະມາຊິກ ອາຊຽນ (ມາເລເຊຍ, ຟີລິບປິນ, ບຣູນາຍ ແລະ ສິງກະໂປ) ແລະ ປະເທດທາງຜ່ານ (ໄທ ແລະ ຫວຽດນາມ) ແຕ່ຫຼາຍກ່ອນປະເທດ ອິນໂດເນເຊຍທີ່ມີພຽງ 3 ມາດຕະການ ຈັດຢູ່ໃນໝວດ A (ເອກະສານຊ້ອນທ້າຍ, ຕາຕະລາງ A.4).

ຖ້າທຽບກັບ ປະເທດ ໄທ ແລະ ຫວຽດນາມ, ຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາດັ່ງກ່າວ ຍັງມີຂໍ້ຈຳກັດໃນການນຳໃຊ້ລະບົບອັດຕະໂນມັດສຳລັບ ການແຈ້ງພາສີ ແລະ ການອອກໃບອະນຸຍາດທາງດ້ານການຄ້າ, ບຸກຄະລາກອນທີ່ມີຄວາມຮູ້ໃນລະດັບສູງ, ເສລີພາບຂອງການຜ່ານແດນ ແລະ ການຮ່ວມມືດ້ານພາສີ. ບາງມາດຕະການທີ່ປະເທດໄທ ແລະ ຫວຽດນາມ ເຊັ່ນ: ມາດຕະການ 6.1 ເຊິ່ງເປັນລະບຽບການເກັບຄ່າທຳນຽມ ແລະ ຄ່າບໍລິການທົ່ວໄປ ສຳລັບການນຳເຂົ້າ ແລະ ສົ່ງອອກ; ມາດຕະການ 10 ເຊິ່ງເປັນການນຳໃຊ້ລະບົບອັດຕະໂນມັດສຳລັບ ການ

ແຈ້ງພາສີ ແລະ ການອອກໃບອະນຸຍາດທາງດ້ານການຄ້າ; ມາດຕະການ 7.4 ແລະ 7.5 ເຊິ່ງເປັນການນຳໃຊ້ຄວາມຮູ້ທາງດ້ານວິຊາການລະດັບສູງ ເພື່ອບໍລິຫານຄວາມສ່ຽງ ແລະ ກວດສອບສິນຄ້າພາຍຫຼັງທີ່ຖືກປ່ອຍອອກ.

ຖ້າທຽບກັບ ປະເທດ ຣູວັນດາ ແລະ ເຊເນການ, ຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາໃນຂອບເຂດທົ່ວປະເທດ ແມ່ນຍັງມີຂໍ້ຈຳກັດດ້ານການນຳໃຊ້ລະບົບອີເລັກໂທຣນິກ ແລະ ການຂາດນັກວິຊາການລະດັບສູງ ເພື່ອອຳນວຍຄວາມສະດວກທາງດ້ານການຄ້າ. ບາງມາດຕະການທີ່ປະເທດເຊເນການເຮັດໄດ້ດີກວ່າ ສປປ ລາວ ປະກອບດ້ວຍ ມາດຕະການ 10.2-10.4 ເຊິ່ງເປັນມາດຕະການ ທີ່ໃຊ້ລະບົບອີເລັກໂທຣນິກໃນການອຳນວຍຄວາມສະດວກທາງດ້ານການຄ້າ. ບາງມາດຕະການທີ່ປະເທດ ຣູວັນດາ ເຮັດໄດ້ດີກວ່າ ສປປ ລາວ ປະກອບດ້ວຍ ມາດຕະການ 7.4 ແລະ 7.5 ເຊິ່ງເປັນມາດຕະການທີ່ໃຊ້ຄວາມຮູ້ຂອງພະນັກງານວິຊາການລະດັບສູງ ໃນການບໍລິຫານຄວາມສ່ຽງ ແລະ ການກວດສອບສິນຄ້າພາຍຫຼັງທີ່ຖືກປ່ອຍອອກ (ເອກະສານຊ້ອນທ້າຍ, ຕາຕະລາງ A.5).

ຜົນການປະເມີນຂອງ ສປປ ລາວ ແມ່ນມີທັງໝົດ 09 ມາດຕະການ ທີ່ນອນຢູ່ໃນໝວດ A ຂອງປະເທດທາງຜ່ານທາງດ້ານການຄ້າຂອງ ສປປ ລາວ ແລະ ປະເທດດ້ອຍພັດທະນາ. ປັດໄຈຕົ້ນຕໍທີ່ ສປປ ລາວ ມີຄວາມສາມາດຈັດຕັ້ງປະຕິບັດໄດ້ເທົ່າທຽມກັບບັນດາປະເທດ ດັ່ງກ່າວ ແມ່ນຍ້ອນການນຳໃຊ້ ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ (ເຊັ່ນ: ມາດຕະການ 1.4); ການນຳໃຊ້ລະບົບອາຊີກູດາ ເພື່ອສົ່ງຂໍ້ຄວາມກ່ຽວກັບການກັກກັນສິນຄ້າເພື່ອກວດສອບ ຫາຜູ້ນຳເຂົ້າ (ເຊັ່ນ: ມາດຕະການ 5.2); ແລະ ຂັ້ນຕອນການກວດກາສິນຄ້ານຳເຂົ້າພາຍໃຕ້ລະບົບເຈ້ຍ-ສໍ (ເຊັ່ນ: ມາດຕະການ 9, 10.5) (ເອກະສານຊ້ອນທ້າຍ, ຕາຕະລາງ A.4 ແລະ A.5).

ປັດໄຈຕົ້ນຕໍທີ່ ສປປ ລາວ ມີຄວາມສາມາດຈັດຕັ້ງປະຕິບັດໄດ້ດີກວ່າສອງປະເທດດັ່ງກ່າວ ແມ່ນຍ້ອນ ການນຳໃຊ້ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ (ເຊັ່ນ: ມາດຕະການ 1.1-1.3). ເຖິງຢ່າງໃດກໍ່ຕາມ, ຜົນການປະເມີນຢູ່ຂັ້ນທ້ອງຖິ່ນ ໄດ້ຊີ້ໃຫ້ເຫັນວ່າ ພະນັກງານລັດຂັ້ນແຂວງ ແລະ ເຈົ້າໜ້າທີ່ປະຈຳດ່ານ ຍັງມີຄວາມຮັບຮູ້ຈຳກັດ ກ່ຽວກັບສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ. ສະນັ້ນ, ທິດທາງການເຜີຍແຜ່ຂໍ້ມູນທາງດ້ານການຄ້າທີ່ມີປະສິດທິພາບ ຄວນເນັ້ນໃສ່ ການສ້າງຄວາມອາດສາມາດໃຫ້ພະນັກງານ ພາກລັດ ແລະ ພາກທຸລະກິດ ໃນການນຳໃຊ້ສູນຂໍ້ມູນຂ່າວສານທາງດ້ານການຄ້າ.

# ພາກທີ 4 ໄລຍະເວລາສຳລັບການກະກຽມຈັດຕັ້ງປະຕິບັດສັນຍາ

ຜົນກະທົບຂອງສັນຍາ ຕໍ່ວຽກງານອຳນວຍຄວາມສະດວກທາງດ້ານການຄ້າຂອງ ສປປ ລາວ ແມ່ນຂຶ້ນກັບຄວາມພ້ອມຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດ ບັນດາມາດຕະການໃນ ໝວດ A, B, C. ອີງຕາມມາດຕາ 15 ຂອງສັນຍາອຳນວຍຄວາມສະດວກທາງດ້ານການຄ້າ, ສປປ ລາວ ຕ້ອງແຈ້ງ ແລະ ຈັດຕັ້ງປະຕິບັດບັນດາມາດຕະການໃນໝວດ A ພາຍໃນ ເວລາ 1 ປີ ຫຼັງຈາກທີ່ສັນຍາມີຜົນບັງຄັບໃຊ້ ຫຼື ພາຍຫຼັງທີ່ 2/3 ຂອງປະເທດສະມະຊິກ ໄດ້ແຈ້ງ ແລະ ໃຫ້ສັດຕະຍາບັນສັນຍາ ຕໍ່ຄະນະກຳມະການ WTO.

ສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ຄາດວ່າ ຈະມີຜົນບັງຄັບໃຊ້ ໃນຕົ້ນປີ 2016. ປັດຈຸບັນ, ບັນດາສະມາຊິກຂອງ WTO ທີ່ໄດ້ແຈ້ງໝວດ A ຕໍ່ຄະນະກຳມະການ WTO ປະກອບດ້ວຍ 72 ປະເທດ; ໃນນັ້ນ, 55 ປະເທດ ໄດ້ແຈ້ງ ໃນປີ 2014 ແລະ 17 ປະເທດ ໃນປີ 2015. ເຫດການພົ້ນເດັ່ນທີ່ຈະເຮັດໃຫ້ສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ມີຜົນບັງຄັບໃຊ້ໄວຂຶ້ນ ແມ່ນການກະກຽມຈັດກອງປະຊຸມລັດຖະມົນຕີຄັ້ງທີ 10 ຂອງ WTO ເຊິ່ງຈະກະຕຸ້ນໃຫ້ບັນດາປະເທດສະມາຊິກ ໃຫ້ສັດຕະຍາບັນສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ຕໍ່ຄະນະກຳມະການ WTO ຫຼາຍຂຶ້ນ. ຫົວໜ້າ WTO, ທ່ານ Roberto Azevêdo ໄດ້ກ່າວ ຢູ່ໃນກອງປະຊຸມທົບທວນຄືນການຊ່ວຍເຫຼືອທາງດ້ານການຄ້າຄັ້ງທີ 5 ວ່າ: "ກອງປະຊຸມລັດຖະມົນຕີຄັ້ງທີ 10 ຈະເປັນໂອກາດຄັ້ງທຳອິດ ນັບຕັ້ງແຕ່ການສະຫຼຸບສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ທີ່ບາລີ ປີ 2013 ເພື່ອສະແດງໃຫ້ເຫັນວ່າ ລະບົບການຄ້າແບບຫຼາຍຝ່າຍ ສາມາດບັນລຸການເຈລະຈາ ເພື່ອຜົນປະໂຫຍດຂອງປະເທດດ້ອຍພັດທະນາ ແລະ ດ້ອຍໂອກາດໃນການເຂົ້າຮ່ວມການຄ້າຂອງໂລກ".[4] ກອງປະຊຸມດັ່ງກ່າວ ຈະຖືກຈັດຂຶ້ນ ທີ່ ໄນໂຣບີ, ປະເທດເຄນຢາ ລະຫວ່າງ ວັນທີ 15-18 ທັນວາ 2015, ເພື່ອພັດທະນາການຄ້າແບບຫຼາຍຝ່າຍ ໃຫ້ມີຄວາມເຂັ້ມແຂງ, ແນໃສ່ປະກອບສ່ວນແກ່ເປົ້າໝາຍການພັດທະນາແບບຍືນຍົງ ຂອງອົງການສະຫະປະຊາຊາດ ຫຼັງຈາກ ປີ 2015. ອີງຕາມແນວໂນ້ມດັ່ງກ່າວ, ການແຈ້ງໝວດ A ຂອງປະເທດສະມາຊິກມີແນວໂນ້ມເພີ່ມຂຶ້ນເລື້ອຍໆກ່ອນຈະເຖິງທ້າຍປີ 2015 ແຕ່ການໃຫ້ສັດຕະຍາບັນ ຄາດວ່າ ຈະໃຊ້ເວລາດົນພໍສົມຄວນ ເພາະວ່າ ມາເຖິງປັດຈຸບັນ ມີພຽງ 12 ປະເທດທີ່ໄດ້ໃຫ້ສັດຕະຍາບັນ.

ສປປ ລາວ ອາດພິຈາລະນາ 03 ທາງເລືອກ ສຳລັບ ການແຈ້ງ ໝວດ A ແລະ ໃຫ້ສັດຕະຍາບັນສັນຍາ ຄື: (1) ເດືອນກັນຍາ ປີ 2015, (2) ເດືອນຕຸລາ ປີ 2015, ແລະ (3) ທ້າຍປີ 2016. ຜົນການວິເຄາະຄວາມພ້ອມຂອງ ສປປ ລາວ ຊີ້ໃຫ້ເຫັນວ່າ: (1) ສປປ ລາວ ມີຄວາມພ້ອມທີ່ຈະແຈ້ງ ໝວດ A ໃນເດືອນກັນຍາ ປີ 2015 ແລະ ໃຫ້ສັດຕະຍາບັນສັນຍາ ໃນທ້າຍປີ 2015; ຫຼື (2) ສປປ ລາວ ຄວນແຈ້ງໝວດ A ໃນເດືອນຕຸລາ ປີ 2015 ແລະ ໃຫ້ສັດຕະຍາບັນສັນຍາ ໃນທ້າຍປີ 2015; ຫຼື (3) ສປປ ລາວ ຄວນແຈ້ງໝວດ A ໃນທ້າຍປີ 2015 ແລະ ໃຫ້ສັດຕະຍາບັນສັນຍາ ໃນທ້າຍປີ 2016 ເພື່ອສັງເກດຄວາມຄືບໜ້າການໃຫ້ສັດຕະຍາບັນຂອງບັນດາປະເທດດ້ອຍພັດທະນາອື່ນ. ເຖິງຢ່າງໃດກໍ່ຕາມ, ຄວາມແຕກຕ່າງຂອງໄລຍະເວລາ 1 ປີ ສຳລັບການໃຫ້ສັດຕະຍາບັນ ໃນທ້າຍປີ 2015 ແລະ ໃນທ້າຍປີ 2016 ຈະບໍ່ມີຜົນກະທົບຕໍ່ການປັບປຸງຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາ ຍ້ອນວ່າ ບັນດາຕົວກຳນົດຄວາມພ້ອມໃນການຈັດຕັ້ງປະຕິບັດສັນຍາ ເຊັ່ນ: ນິຕິກຳ, ໂຄງລ່າງພື້ນຖານ ແລະ ບຸກຄະລາກອນ ຈະບໍ່ມີການປ່ຽນແປງ ຫຼື ປ່ຽນແປງໜ້ອຍ ໃນຊ່ວງເວລາດັ່ງກ່າວ.

ຖ້າສັນຍາມີຜົນບັງຄັບໃຊ້ ຕົ້ນປີ 2016, ສປປ ລາວ ຕ້ອງວາງແຜນຈັດຕັ້ງປະຕິບັດ ໝວດ A, B, C ຕາມລຳດັບ. ຖ້າວ່າ ສປປ ລາວ ແຈ້ງ ແລະ ໃຫ້ສັດຕະຍາບັນ 13 ມາດຕະການໃນໝວດ A ໃນທ້າຍປີ 2015, ໃນປີ 2016 ສປປ

---

[4] https://www.wto.org/english/news_e/news15_e/aid_01jul15_e.htm

ລາວ ຄວນກະກຽມແຜນງານ ໃນການແຈ້ງ 07 ມາດຕະການ ໃນໝວດ B ແລະ ກໍານົດເວລາໃນການຈັດຕັ້ງປະຕິບັດ (ອີງຕາມ ມາດຕາ 16.2a). ໃນຕົ້ນປີ 2017, ສປປ ລາວ ຕ້ອງແຈ້ງ 16 ມາດຕະການໃນໝວດ C (ອີງຕາມ ມາດຕາ 16.2c). ສປປ ລາວ ຕ້ອງແຈ້ງຂໍ້ມູນກ່ຽວກັບການຂໍຄວາມຊ່ວຍເຫຼືອເພື່ອສ້າງຄວາມອາດສາມາດ ໃນຕົ້ນປີ 2018 (ອີງຕາມ ມາດຕາ 16.2d), ແລະ ຕ້ອງຢືນຢັນວັນທີທີ່ຊັດເຈນ ໃນການຈັດຕັ້ງປະຕິບັດບັນດາມາດຕະການ ໃນໝວດ B ໃນທ້າຍປີ 2018 (ອີງຕາມ ມາດຕາ 16.2b). ໃນຕົ້ນປີ 2020, ສປປ ລາວ ຕ້ອງສະໜອງຂໍ້ມູນກ່ຽວກັບການກະກຽມການສ້າງຄວາມອາດສາມາດ ສໍາລັບການຈັດຕັ້ງປະຕິບັດໝວດ C (ອີງຕາມ ມາດຕາ 16.2e). ໃນກາງປີ 2021, ສປປ ລາວ ຕ້ອງລາຍງານຄວາມຄືບໜ້າ ກ່ຽວກັບ ການຊ່ວຍເຫຼືອທາງດ້ານການເງິນ ແລະ ວິຊາການ ແລະ ແຈ້ງວັນທີຢ່າງຊັດເຈນ ໃນການຈັດຕັ້ງປະຕິບັດໝວດ C ຕໍ່ຄະນະກໍາມະການ WTO (ອີງຕາມ ມາດຕາ 16.2f).

## ພາກທີ 5 ສະຫຼຸບຜົນການປະເມີນຄວາມພ້ອມຂອງ ສປປ ລາວ

ການຈັດຕັ້ງປະຕິບັດສັນຍາອຳນວຍຄວາມສະດວກທາງດ້ານການຄ້າຂອງ ອົງການການຄ້າໂລກ (WTO) ເປັນຍຸດທະສາດອັນດີ ໃນການຫຼຸດຜ່ອນຕົ້ນທຶນທາງດ້ານການຄ້າໃຫ້ແກ່ປະເທດສະມາຊິກ. ແຕ່ວ່າຄວາມອາດສາມາດໃນການຈັດຕັ້ງປະຕິບັດສັນຍາຂອງແຕ່ລະປະເທດສະມາຊິກ ມີຄວາມແຕກຕ່າງກັນ ຕາມລະດັບການພັດທະນາເສດຖະກິດຂອງແຕ່ລະປະເທດ. ຈຸດປະສົງຂອງບົດລາຍສະບັບນີ້ ແມ່ນເພື່ອວິເຄາະຄວາມພ້ອມຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດບັນດາມາດຕາ ຂອງສັນຍາອຳນວຍຄວາມສະດວກທາງດ້ານການຄ້າ ໂດຍອີງໃສ່ 03 ຕົວຊີ້ວັດ ຄື: ນິຕິກຳ, ໂຄງລ່າງພື້ນຖານ, ແລະ ບຸກຄະລາກອນ ທີ່ຕິດພັນກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ.

ຜົນການວິເຄາະ ໄດ້ຊີ້ໃຫ້ເຫັນ ຄວາມພ້ອມຂອງ ສປປ ລາວ ແລະ ໄລຍະເວລາກະກຽມຈັດຕັ້ງປະຕິບັດສັນຍາ. ສຳລັບຄວາມພ້ອມຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາ, ຜົນການວິເຄາະ ສະແດງໃຫ້ເຫັນວ່າ: ໝວດ A ປະກອບດ້ວຍ 13 ມາດຕະການ; ໝວດ B ປະກອບດ້ວຍ 07 ມາດຕະການ; ໝວດ C ປະກອບດ້ວຍ 16 ມາດຕະການ. ນອກນັ້ນ, ການວິເຄາະຕົວກຳນົດຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດໝວດ A ຊີ້ໃຫ້ເຫັນວ່າ: (1) ນິຕິກຳທີ່ເປັນພື້ນຖານແກ່ການຈັດຕັ້ງປະຕິບັດສັນຍາ ປະກອບດ້ວຍ ກົດໝາຍ 03 ສະບັບ ຄື: ກົດໝາຍ ວ່າດ້ວຍພາສີ, ກົດໝາຍ ວ່າດ້ວຍອາຫານ, ແລະ ກົດໝາຍ ວ່າດ້ວຍ ການປ້ອງກັນພືດ; (2) ໂຄງລ່າງພື້ນຖານ ປະກອບດ້ວຍ ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ແລະ ລະບົບອາຊີກູດາ; (3) ບຸກຄະລາກອນໃນການຈັດຕັ້ງປະຕິບັດສັນຍາ ປະກອບດ້ວຍ ສະມາຊິກ ກຂອຄ. ເຖິງຢ່າງໃດກໍ່ຕາມ, ຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາ ແມ່ນຍັງຕໍ່າກວ່າບັນດາປະເທດທາງຜ່ານທາງດ້ານການຄ້າຂອງ ສປປ ລາວ (ໄທ ແລະ ຫວຽດນາມ) ແລະປະເທດດ້ອຍພັດທະນາ ເປັນຕົ້ນແມ່ນການນຳໃຊ້ລະບົບອີເລັກໂທຣນິກ ແລະ ບຸກຄະລາກອນທີ່ມີຄວາມຮູ້ໃນລະດັບສູງໃນການບໍລິຫານຄວາມສ່ຽງ ໃນການອຳນວຍຄວາມສະດວກທາງດ້ານການຄ້າ.

ສຳລັບໄລຍະເວລາໃນການກະກຽມຈັດຕັ້ງປະຕິບັດສັນຍາ, ສປປ ລາວ ອາດພິຈາລະນາ 03 ທາງເລືອກ ສຳລັບການແຈ້ງ ໝວດ A ແລະ ໃຫ້ສັດຕະຍາບັນສັນຍາ ຄື: (1) ເດືອນກັນຍາ ປີ 2015, (2) ເດືອນຕຸລາ ປີ 2015, ແລະ (3) ທ້າຍປີ 2016. ຜົນການວິເຄາະຄວາມພ້ອມຂອງ ສປປ ລາວ ຊີ້ໃຫ້ເຫັນວ່າ: (1) ສປປ ລາວ ມີຄວາມພ້ອມທີ່ຈະແຈ້ງໝວດ A ໃນເດືອນກັນຍາ ປີ 2015 ແລະ ໃຫ້ສັດຕະຍາບັນສັນຍາ ໃນທ້າຍປີ 2015; ຫຼື (2) ສປປ ລາວ ຄວນແຈ້ງໝວດ A ໃນເດືອນຕຸລາ ປີ 2015 ແລະ ໃຫ້ສັດຕະຍາບັນສັນຍາ ໃນທ້າຍປີ 2015; ຫຼື (3) ສປປ ລາວ ຄວນແຈ້ງໝວດ A ໃນທ້າຍປີ 2015 ແລະ ໃຫ້ສັດຕະຍາບັນສັນຍາ ໃນທ້າຍປີ 2016 ເພື່ອສັງເກດຄວາມຄືບໜ້າການໃຫ້ສັດຕະຍາບັນຂອງບັນດາປະເທດດ້ອຍພັດທະນາອື່ນ. ເຖິງຢ່າງໃດກໍ່ຕາມ, ຄວາມແຕກຕ່າງຂອງໄລຍະເວລາ 1 ປີ ສຳລັບການໃຫ້ສັດຕະຍາບັນ ໃນທ້າຍປີ 2015 ແລະ ໃນທ້າຍປີ 2016 ຈະບໍ່ມີຜົນກະທົບຕໍ່ການປັບປຸງຄວາມອາດສາມາດຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດສັນຍາ ຍ້ອນວ່າ ບັນດາຕົວກຳນົດຄວາມພ້ອມໃນການຈັດຕັ້ງປະຕິບັດສັນຍາ ເຊັ່ນ: ນິຕິກຳ, ໂຄງລ່າງພື້ນຖານ ແລະ ບຸກຄະລາກອນ ຈະບໍ່ມີການປ່ຽນແປງ ຫຼື ປ່ຽນແປງພຽງເລັກໜ້ອຍ ໃນຊ່ວງເວລາດັ່ງກ່າວ.

# ເອກະສານຊ້ອນທ້າຍ

ຕາຕະລາງທີ A.1: ຄວາມພ້ອມຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດມາດຕາໃນໝວດ A ຂອງ ສັນຍາອຳນວຍຄວາມສະດວກທາງດ້ານການຄ້າ (13 ມາດຕະການ)

| ມາດຕາ | ນິຕິກຳ | ໂຄງລ່າງພື້ນຖານ/ຂະແໜງການຮັບຜິດຊອບ | ບຸກຄະລາກອນ |
|---|---|---|---|
| 1. Publication and availability of information (ລວມ 1.1-1.4) | ສປປ ລາວມີຂໍ້ຕົກລົງຂອງທ່ານຮອງນາຍົກລັດຖະມົນຕີ ເລກທີ 90/ຄປຊ (ຄະນະກຳມະການປະສານງານລະດັບຊາດ)ເຊິ່ງກຳນົດວ່າທຸກໆລະບຽບການ, ເອກະສານ ແລະ ນິຕິກຳທີ່ຕິດພັນກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຕ້ອງນຳມາເຜີຍແຜ່ໃນສູນຂໍ້ມູນຂ່າວສານ. | ສູນຂໍ້ມູນຂ່າວສານທາງດ້ານການຄ້າ | ສະມາຊິກ ກຂອຄ |
| 4. Procedures for appeal or review | ສປປ ລາວ ມີກົດໝາຍວ່າດ້ວຍການຮ້ອງທຸກຊຶ່ງໄດ້ຖືກສ້າງຂຶ້ນເພື່ອໃຫ້ສິດແກ່ບຸກຄົນໃນການຮ້ອງທຸກ (ຂໍອຸທອນ).<br>- ການແກ້ໄຂຂໍ້ຂັດແຍ້ງກ່ຽວກັບພາສີ ໄດ້ລະບຸໄວ້ໃນ ກົດໝາຍ ວ່າດ້ວຍພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011, ໝວດທີ 2 ມາດຕາ 68-70 ການສະເໜີຄືນກ່ຽວກັບ ມູນຄ່າແຈ້ງພາສີ, ລະຫັດສິນຄ້າ ແລະ ແຫຼ່ງກຳເນີດສິນຄ້າ, ເຄື່ອງຂອງ.<br>- ການແກ້ຂໍ້ຂັດແຍ້ງ ກ່ຽວກັບວຽກງານອາຫານ ໄດ້ລະບຸໄວ້ໃນ ພາກທີ 6 ຂອງກົດໝາຍ ວ່າດ້ວຍອາຫານ ເລກທີ 33/ສພຊ ລົງວັນທີ 20 ສິງຫາ 2013.<br>- ການແກ້ໄຂຂໍ້ຂັດແຍ້ງກ່ຽວກັບການປ້ອງກັນພືດໄດ້ລະບຸໄວ້ໃນ ພາກທີ 5 ຂອງ ກົດໝາຍ ວ່າດ້ວຍ ການປ້ອງກັນພືດ ເລກທີ 06/ສພຊ ລົງວັນທີ 09 ທັນວາ 2008. (ແຕ່ບໍ່ໄດ້ອະທິບາຍລະອຽດກ່ຽວກັບການແກ້ໄຂຂໍ້ຂັດແຍ້ງດັ່ງກ່າວ). | ກະຊວງການເງິນ, ກະຊວງສາທາລະນະສຸກ, ແລະ ກະຊວງກະສິກຳ ແລະ ປ່າໄມ້ | ການນຳໃຊ້ບຸກຄະລາກອນເພື່ອແກ້ໄຂຂໍ້ຂັດແຍ້ງມີຄວາມແຕກຕ່າງກັນ ຕາມແຕ່ລະຂະແໜງການ ເຊັ່ນ:<br>- ຂໍ້ຂັດແຍ້ງກ່ຽວກັບພາສີຈະໄດ້ຮັບການແກ້ໄຂໂດຍຄະນະກຳມະການແກ້ໄຂຄຳສະເໜີປະຈຳເຂດ, ປະຈຳຂັ້ນສູນກາງ ເຊິ່ງຖືກແຕ່ງຕັ້ງໂດຍ ລັດຖະມົນຕີວ່າ ການກະຊວງການເງິນ.<br>- ຂໍ້ຂັດແຍ້ງກ່ຽວກັບອາຫານ ຈະໄດ້ຮັບການແກ້ໄຂໂດຍ ສານປະຊາຊົນ.<br>- ຂໍ້ຂັດແຍ້ງກ່ຽວກັບການປ້ອງກັນພືດ ຈະໄດ້ຮັບການແກ້ໄຂ ໂດຍເຈົ້າໜ້າທີ່ຂອງຂະແໜງການກະສິກຳ ແລະ ປ່າໄມ້ ຊຶ່ງມີການສົມທົບ ກັບຂະແໜງການອື່ນ ທີ່ກ່ຽວຂ້ອງ. |
| 5.1 Notifications for enhanced controls or inspections | ບັນດາແຈ້ງການສຳລັບການຄວບຄຸມ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບ, ທັນກັບສະພາບການ ແລະ ມີກຳນົດເວລາທີ່ແນ່ນອນໃນການຈັດຕັ້ງປະຕິບັດ ແລະ ການຍົກເລີກແຈ້ງການ ໂດຍອີງຕາມລະດັບຄວາມສ່ຽງຂອງແຕ່ລະບັນຫາ. | ຂະແໜງສາທາລະນະສຸກ, ຂະແໜງກະສິກຳ ແລະ ປ່າໄມ້ | |

| ມາດຕາ | ນິຕິກຳ | ໂຄງລ່າງພື້ນຖານ/ຂະແໜງການ ຮັບຜິດຊອບ | ບຸກຄະລາກອນ |
|---|---|---|---|
| 5.2 Detention | ການກັກກັນສິນຄ້າເພື່ອກວດສອບ ໄດ້ຖືກລະບຸໄວ້ໃນກົດໝາຍຂອງ ສປປ ລາວ:<br>1. ກົດໝາຍ ວ່າດ້ວຍພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011, ໝວດ 6 ມາດຕາ 26 ການກວດກາສິນຄ້າ, ເຄື່ອງຂອງອອກຈາກດ່ານພາສີ ຫຼື ສາງ.<br>2. ກົດໝາຍ ວ່າດ້ວຍ ການປ້ອງກັນພືດ ເລກທີ 06/ສພຊ ລົງວັນທີ 09 ທັນວາ 2008, ໝວດ 2 ມາດຕາ 17 ການກວດກາພືດທີ່ເປັນສິນຄ້າ. | ກະຊວງການເງິນ ແລະ ກະຊວງກະສິກຳ ແລະ ປ່າໄມ້ | ເຈົ້າໜ້າທີ່ພາສີ, ກະຊວງການເງິນ; ເຈົ້າໜ້າທີ່ປ້ອງກັນພືດ, ກະຊວງກະສິກຳ ແລະ ປ່າໄມ້ |
| 6.2 Specific disciplines on fees and charges for customs processing imposed on or in connection with importation and exportation | ບັນດາຂະແໜງການປະຈຳດ່ານ ນຳໃຊ້ ລະບົບ ASYCUDA.[5] ເພື່ອເກັບຄ່າທຳນຽມ ແລະ ຄ່າບໍລິການ ໃນອັດຕາເທົ່າທຽມກັນ ເຊິ່ງເກັບຈາກການອອກອະນຸຍາດ, ກວດກາ ແລະ ທົດລອງ. ຄ່າທຳນຽມ ແລະ ຄ່າບໍລິການເຫຼົ່ານີ້ ເປັນຈຳນວນໜ້ອຍ ທຽບກັບ ມູນຄ່າການນຳເຂົ້າ ຫຼື ສົ່ງອອກ. | ຂະແໜງການເງິນ, ຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງກະສິກຳ ແລະ ປ່າໄມ້, ຂະແໜງສາທາລະນະສຸກ | ເຈົ້າໜ້າທີ່ພາສີ, ກະຊວງການເງິນ, ເຈົ້າໜ້າທີ່ປ້ອງກັນພືດ, ກະຊວງກະສິກຳ ແລະ ປ່າໄມ້ |
| 7.1 Pre-arrival processing | ຂະບວນການແຈ້ງພາສີສິນຄ້າມາເຖິງ ໄດ້ລະບຸໄວ້ໃນກົດໝາຍ ວ່າດ້ວຍພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011, ມາດຕາ 29 ກ່ຽວກັບ ການແຈ້ງພາສີກ່ອນສິນຄ້າ, ເຄື່ອງຂອງມາຮອດດ່ານພາສີຊາຍແດນ. | ກົມພາສີ, ກະຊວງການເງິນ | ກົມພາສີ, ກະຊວງການເງິນ |
| 9. Movement of goods intended for import under customs control | ການເຄື່ອນຍ້າຍສິນຄ້າທີ່ມີຈຸດປະສົງສຳລັບການນຳເຂົ້າໃນຂອບເຂດຂອງພາສີ ໄດ້ລະບຸໄວ້ໃນ ມາດຕາ 34 ການເຄື່ອນຍ້າຍສິນຄ້າໃນຂອບເຂດຂອງພາສີ, ພາກທີ 5, ກົດໝາຍ ວ່າດ້ວຍ ພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011. | ກະຊວງການເງິນ | ເຈົ້າໜ້າທີ່ພາສີ, ກະຊວງການເງິນ |
| 10.5 Pre-shipment inspection | ສປປ ລາວ ບໍ່ມີການກວດສອບກ່ອນຂົນສົ່ງ ເຊິ່ງສອດຄ່ອງກັບ ມາດຕະການ 10.5 ຂອງສັນຍາອຳນວຍຄວາມສະດວກທາງດ້ານການຄ້າ. | ກົມພາສີ, ກະຊວງການເງິນ | |
| 10.6 Use of customs brokers | ຜູ້ນຳເຂົ້າ ສາມາດແຈ້ງພາສີ ໂດຍບໍ່ຕ້ອງຜ່ານນາຍໜ້າ ເຊິ່ງໄດ້ລະບຸໄວ້ໃນ ມາດຕາ 14 ແລະ 15, ໝວດ 3 ຜູ້ບໍລິການແຈ້ງພາສີ ແລະ ຄວາມຮັບຜິດຊອບຂອງຜູ້ແຈ້ງພາສີ, ກົດໝາຍ ວ່າດ້ວຍພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011. | ລະບົບອາຊີກູດາ | |

[5] ມາດຕະການ 6.1 ວ່າດ້ວຍ ລະບຽບວິໄນທົ່ວໄປຕໍ່ກັບການເກັບຄ່າທຳນຽມ ແລະ ຄ່າບໍລິການທີ່ກ່ຽວຂ້ອງກັບການນຳເຂົ້າ ແລະ ສົ່ງອອກ ແມ່ນຍັງຖືກຈັດຢູ່ໃນໝວດ B ຍ້ອນວ່າ ການຈັດຕັ້ງປະຕິບັດການເກັບຄ່າທຳນຽມ ແລະ ຄ່າບໍລິການດັ່ງກ່າວ ຢູ່ບາງແຂວງ ຍັງບໍ່ສອດຄ່ອງກັບມູນຄ່າ ທີ່ໄດ້ກຳນົດໄວ້ ໃນ ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ, ສະບັບເລກທີ 003/ປປທ.

| ມາດຕາ | ນິຕິກຳ | ໂຄງລ່າງພື້ນຖານ/ຂະແໜງການຮັບຜິດຊອບ | ບຸກຄະລາກອນ |
|---|---|---|---|
| 10.9 Temporary admission of goods and inward and outward processing | ການນຳເຂົ້າ-ສົ່ງອອກສິນຄ້າຊົ່ວຄາວ ໄດ້ລະບຸໄວ້ໃນ ກົດໝາຍ ວ່າດ້ວຍ ພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011, ໝວດ 7 ມາດຕາ 41-49, ກ່ຽວກັບ ການນຳເຂົ້າ-ນຳອອກ ສິນຄ້າ ແລະ ເຄື່ອງຂອງຊົ່ວຄາວ. | ກະຊວງການເງິນ | ເຈົ້າໜ້າທີ່ພາສີ, ກະຊວງການເງິນ |

*ແຫຼ່ງຂໍ້ມູນ:* ສະຫຼຸບຜົນຈາກກອງປະຊຸມ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການປະເມີນຄວາມຕ້ອງການ ແລະ ບູລິມະສິດຂອງ ສປປ ລາວ ລະຫວ່າງວັນທີ 27-29 ກໍລະກົດ 2015.

ຕາຕະລາງທີ A.2: ຄວາມພ້ອມຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດມາດຕາໃນໝວດ B ຂອງ ສັນຍາອຳນວຍຄວາມສະດວກທາງດ້ານການຄ້າ (07 ມາດຕະການ)

| ມາດຕາ | ນິຕິກຳ | ໂຄງລ່າງພື້ນຖານ/ຂະແໜງການຮັບຜິດຊອບ | ບຸກຄະລາກອນ |
|---|---|---|---|
| 2. Opportunity to comment, information before entry into force, and consultations (ລວມ 2.1 ແລະ 2.2) | ສປປ ລາວ ມີນິຕິກຳ ແລະ ກົນໄກ ສຳລັບການປະກອບຄຳເຫັນ ແລະ ການປຶກສາຫາລື.<br>- ສຳລັບການປະກອບຄຳເຫັນ, ສປປ ລາວ ມີກົດໝາຍ ວ່າດ້ວຍການສ້າງສ້າງນິຕິກຳ ເລກທີ 19/ສພຊ ລົງວັນທີ 12 ກໍລະກົດ 2012, ມາດຕາ 8 ວ່າດ້ວຍ ການປະກອບຄຳເຫັນ ຊຶ່ງເປີດໂອກາດໃຫ້ສາທາລະນະຊົນສາມາດປະກອບຄຳເຫັນພາຍໃນ 60 ວັນ ກ່ອນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ.<br>- ສຳລັບການປຶກສາຫາລື, ສປປ ລາວ ມີ ກອງປະຊຸມທຸລະກິດລາວ ແລະ ກຂອຄ ຊຶ່ງເປັນບ່ອນທີ່ມີການປຶກສາຫາລືບັນຫາຂອງທຸລະກິດ. ນອກນັ້ນ, ຂະແໜງພາສີໄດ້ມີການຈັດປະຊຸມປີໜຶ່ງສອງຄັ້ງເພື່ອໃຫ້ມີການປຶກສາຫາລືກັບບັນຫາຕ່າງໆທີ່ເກີດຂຶ້ນ.<br>**<u>ບັນຫາ:</u>** ການອອກບາງນິຕິກຳຂອງພາກລັດ ຍັງຂາດການປຶກສາຫາລື ກັບພາກທຸລະກິດຢູ່ຂັ້ນທ້ອງຖິ່ນ. ຕົວຢ່າງ: ໃນປີ 2014 ແລະ 2015, ເຈົ້າແຂວງໆ ອຸດົມໄຊ ໄດ້ອອກຂໍ້ຕົກລົງ ໃນການອະນຸຍາດໃຫ້ ບໍລິສັດແອວເອັສການຄ້າ ຜູກຂາດການໃຫ້ບໍລິການເອກະສານສົ່ງອອກໝາກໂມ ແລະ ໝາກກ້ວຍ ໄປ ສປ ຈີນ ໂດຍບໍ່ໄດ້ມີການປຶກສາຫາລື ກັບພາກທຸລະກິດ. | ທຸກຂະແໜງການທີ່ຕິດພັນກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ | |
| 6.1 General disciplines on fees and charges imposed on or in connection with importation and exportation | ການເກັບຄ່າທຳນຽມ ແລະ ຄ່າບໍລິການ ໄດ້ຖືກລະບຸໄວ້ໃນ <u>ລັດຖະບັນຍັດ ຂອງປະທານປະເທດ</u> ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ, ສະບັບເລກທີ 003/ປປທ. ໃນລັດຖະບັນຍັດດັ່ງກ່າວ, ຄ່າທຳນຽມ ແລະ ຄ່າບໍລິການທີ່ຕິດພັນກັບການນຳເຂົ້າ - ສົ່ງອອກ ບໍ່ມີຄ່າທານຽມໃດທີ່ໄດ້ຖືກຄິດໄລ່ໃນຮູບແບບອັດຕາພາສີ.<br>**<u>ບັນຫາ:</u>** ບໍ່ມີລະບຽບການຕິດຕາມກວດກາ ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ຢ່າງເປັນທາງການ ເຊິ່ງອາດຈະເຮັດໃຫ້ການຈັດຕັ້ງປະຕິບັດຕົວຈິງມີຄວາມແຕກຕ່າງ ຈາກລັດຖະດຳລັດ. | ຂະແໜງການເງິນ, ຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງກະສິກຳ ແລະ ປ່າໄມ້, ຂະແໜງສາທາລະນະສຸກ | |
| 6.3 Penalty disciplines | ລະບຽບວິໄນສຳລັບການປັບໃໝ ໄດ້ລະບຸໃນກົດໝາຍ ວ່າດ້ວຍພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011, ພາກທີ 14 <u>ມາດຕາ 86-95</u> ກ່ຽວກັບ ຄວາມຜິດທາງດ້ານພາສີ ແລະການດຳເນີນຄະດີທາງພາສີ. | ກົມພາສີ, ກະຊວງການເງິນ | |

| ມາດຕາ | ນິຕິກຳ | ໂຄງລ່າງພື້ນຖານ/ຂະແໜງການຮັບຜິດຊອບ | ບຸກຄະລາກອນ |
|---|---|---|---|
| | **ບັນຫາ:** ພະນັກງານພາສີຈຳນວນໜຶ່ງຍັງຂາດຄວາມຮູ້ ກ່ຽວກັບການປະຕິບັດລະບຽບການລົງໂທດ. | | |
| 7.2 Electronic payment | ຍັງຂາດນິຕິກຳການຊຳລະຜ່ານທາງລະບົບອີເລັກໂທຣນິກ ເຊັ່ນ: ບໍ່ມີຮ່າງກົດໝາຍສຳລັບການນຳໃຊ້ບັດເຄຣດິດ ແລະ ສຳລັບການຈ່າຍພັນທະທາງດ້ານພາສີ | ລະບົບການຊຳລະທາງອີເລັກໂທຣນິກ | |
| 7.3 Separation of release from final determination of customs duties, taxes, fees and charges | ການແຍກການປ່ອຍສິນຄ້າອອກຈາກຂັ້ນຕອນການເສຍພາສີ, ຄ່າທຳນຽມ ແລະ ຄ່າບໍລິການ ໄດ້ລະບຸໄວ້ໃນ ກົດໝາຍ ວ່າດ້ວຍ ພາສີ ເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011, ໝວດ 6 ມາດຕາ 27 ການຄ້ຳປະກັນສາລັບການກວດປ່ອຍສິນຄ້າຈາກ ດ່ານພາສີ ຫຼື ສາງເກັບສິນຄ້າ.<br>**ບັນຫາ:** ມາດຕາ 27 ຂອງ ກົດໝາຍ ວ່າດ້ວຍ ພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011 ໄດ້ກຳນົດໃຫ້ຜູ້ແຈ້ງພາສີ ຈ່າຍເງິນຄ້ຳປະກັນ 120% ຂອງມູນຄ່າພາສີ ແລະ ພັນທະອື່ນ ເພື່ອນຳເອົາສິນຄ້າ, ເຄື່ອງຂອງອອກຈາກດ່ານພາສີ ຫຼື ສາງ ກ່ອນການແຈ້ງພາສີເປັນລາຍລະອຽດ. ມູນຄ່າການຄ້ຳປະກັນດັ່ງກ່າວ ຂັດກັບມາດຕະການ 7.3 ຂອງສັນຍາ ເຊິ່ງໄດ້ລະບຸວ່າ ມູນຄ່າຄ້ຳປະກັນ ຕ້ອງບໍ່ເກີນຜົນລວມຂອງມູນຄ່າພາສີ ແລະ ພັນທະອື່ນ. | ກະຊວງການເງິນ | ເຈົ້າໜ້າທີ່ພາສີ, ກະຊວງການເງິນ |
| 7.9 Perishable goods | ຂະແໜງພາສີ ແລະ ຂະແໜງການກະສິກຳ ແລະ ປ່າໄມ້ ສາມາດຈັດຕັ້ງປະຕິບັດຕົວຈິງໄດ້ສ່ວນຫຼາຍ ໃນການຈັດບູລິມະສິດ ສຳລັບການກວດກາ ແລະ ປ່ອຍສິນຄ້າທີ່ເນົ່າເປື່ອຍໄວ ທັງໃນໂມງການ ແລະ ນອກໂມງການ (ວັນເສົາ). | ຂະແໜງພາສີ ແລະ ຂະແໜງການກະສິກຳ ແລະ ປ່າໄມ້ | |

*ແຫຼ່ງຂໍ້ມູນ:* ສະຫຼຸບຜົນຈາກກອງປະຊຸມ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການປະເມີນຄວາມຕ້ອງການ ແລະ ບູລິມະສິດຂອງ ສປປ ລາວ ລະຫວ່າງວັນທີ 27-29 ກໍລະກົດ 2015.

ຕາຕະລາງທີ A.3: ຄວາມພ້ອມຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດມາດຕາໃນໝວດ C ຂອງ ສັນຍາອຳນວຍຄວາມສະດວກທາງດ້ານການຄ້າ (16 ມາດຕະການ)

| ມາດຕາ | ນິຕິກຳ | ໂຄງລ່າງພື້ນຖານ/ຂະແໜງການຮັບຜິດຊອບ | ບຸກຄະລາກອນ |
|---|---|---|---|
| 3. Advance rulings | ການຢັ້ງຢືນຮັບຮອງລ່ວງໜ້າ ໄດ້ລະບຸໄວ້ໃນ ກົດໝາຍ ວ່າດ້ວຍພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011, ມາດຕາ 28 ກ່ຽວກັບ ການຢັ້ງຢືນຮັບຮອງລ່ວງໜ້າ ເຊິ່ງໄດ້ລະບຸວ່າ: "ໃນກໍລະນີທີ່ຜູ້ແຈ້ງພາສີບໍ່ໝັ້ນໃຈ ໃນການຈັດເລກລະຫັດ ແລະ ແຫຼ່ງກຳເນີດສິນຄ້າ ເພື່ອປະກອບການແຈ້ງພາສີເປັນລາຍລະອຽດ, ຜູ້ແຈ້ງພາສີສາມາດຂໍຄຳແນະນຳ ແລະ ການຢັ້ງຢືນຮັບຮອງລ່ວງໜ້ານຳ ລັດຖະການພາສີ"<br>**<u>ບັນຫາ:</u>**<br>1. ຂັ້ນຕອນທາງດ້ານພາສີຄວນຈະມີຄວາມງ່າຍດາຍ ແລະ ກົມກຽວ ກັບສາກົນ.<br>2. ການປະຕິບັດງານຕາມດ່ານພາສີຕ່າງໆ ຍັງບໍ່ທັນເປັນຮູບແບບດຽວກັນໃນຂອບເຂດທົ່ວປະເທດ.<br>3. ຂາດພະນັກງານທີ່ມີຄວາມຮູ້ຄວາມສາມາດກ່ຽວກັບການອະນຸມັດລ່ວງໜ້າຂອງການແຈ້ງພາສີ.<br>4. ຜູ້ຄ້າ (ພາກທຸລະກິດ) ຍັງບໍ່ຄຸ້ນເຄີຍກັບຂັ້ນຕອນການອະນຸມັດລ່ວງໜ້າຂອງການແຈ້ງພາສີ. | ລະບົບຄອມພິວເຕີ<br><br>**<u>ຄວາມຊ່ວຍເຫຼືອ:</u>**<br>1. ຕ້ອງການ TA (ການຝຶກອົບຮົມຂັ້ນພື້ນຖານ ຫຼື ລະດັບສູງ)<br>2. ປັບປຸງລະບົບຄອມພິວເຕີໃຫ້ທັນສະໄໝຂຶ້ນ<br>3. ຈັດຝຶກອົບຮົມດ້ານ ICT | |
| 5.3 Test procedures | ການກວດກາກັກພືດສຳລັບການທົດສອບຕົວຢ່າງຄັ້ງທີ 02 ມີຢູ່ພາຍໃຕ້ ກົດໝາຍການປົກປ້ອງປ່າໄມ້<br>**<u>ບັນຫາ:</u>**<br>1. ຍັງບໍ່ມີຂໍ້ມູນ ແລະ ຂັ້ນຕອນທີ່ກຳນົດຢ່າງຈະແຈ້ງ<br>2. ຍັງຂາດຫ້ອງທົດລອງ/ກວດກາໃນ ສປປ ລາວ<br>3. ຍັງຂາດການຝຶກອົບຮົມສຳລັບການຄຸ້ມຄອງການກວດສອບຄວາມຖືກຕ້ອງ/ຄວາມສອດຄ່ອງ | ຫ້ອງທົດລອງ, ອຸປະກອນຮັບໃຊ້ການທົດລອງ | |
| 7.4 Risk management | ການບໍລິຫານຄວາມສ່ຽງ ໄດ້ລະບຸໄວ້ ໃນກົດໝາຍ ວ່າດ້ວຍພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011, ໝວດທີ 4, ມາດຕາ 16 ແລະ 17 ວ່າດ້ວຍ ການບໍລິຫານຄວາມສ່ຽງດ້ານພາສີ.<br>**<u>ບັນຫາ:</u>** 12 ດ່ານສາກົນຍັງບໍ່ທັນນຳໃຊ້ລະບົບອາຊີກູດາ | ກົມພາສີ, ກະຊວງການເງິນ | **<u>ບັນຫາ:</u>** ຍັງຂາດຄວາມຮູ້ກ່ຽວກັບ ການບໍລິຫານຄວາມສ່ຽງ ເຊັ່ນ: ການວິໃຈຂໍ້ມູນ, ເຕັກນິກໃນການກຳນົດເປົ້າໝາຍການກວດ. |
| 7.5 Post-clearance audit | ການກວດສອບຄືນພາຍຫຼັງການປ່ອຍສິນຄ້າ (PCA)ໄດ້ລະບຸໄວ້ ໃນກົດໝາຍ ວ່າດ້ວຍພາສີ | ລະບົບເກັບກຳຂໍ້ມູນ, ຄອມພິວເຕີ | **<u>ບັນຫາ:</u>** ບໍ່ມີພະນັກງານ ຫຼື ຜູ້ກວດສອບພຽງພໍ ໃນການ |

| ມາດຕາ | ນິຕິກຳ | ໂຄງລ່າງພື້ນຖານ/ຂະແໜງການຮັບຜິດຊອບ | ບຸກຄະລາກອນ |
|---|---|---|---|
| | ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011, ມາດຕາ 65-67 ກ່ຽວກັບ ການກວດສອບຄືນຂອງລັດຖະການພາສີ.<br>**ບັນຫາ:** ຂາດໂຄງລ່າງພື້ນຖານ ເຊັ່ນ: (1) ບໍ່ມີລະບົບເກັບກຳຂໍ້ມູນທີ່ໃຫ່ຍພຽງພໍ ສຳລັບ PCA; (2) ຂາດຄອມພິວເຕີ ແລະ ສິ່ງອຳນວຍຄວາມສະດວກອື່ນ ສຳລັບພະນັກງານໃໝ່ໃນຂັ້ນສູນກາງ ແລະ ປະຈຳຢູ່ຫ້ອງການພາສີເຂດ | | ດຳເນີນການກວດສອບຄືນການແຈ້ງພາສີ ຢ່າງມີປະສິດຕິຜົນ. |
| 7.6 Establishment and publication of average release times | ກະຊວງການເງິນ ໄດ້ສຳຫຼວດການກວດປ່ອຍສິນຄ້າ 3 ຄັ້ງ:<br>(1) ປີ 2009 ໂດຍການສະໜັບສະໜູນຂອງ WB.<br>(2) ປີ 2012 ໂດຍການສະໜັບສະໜູນຂອງ WB.<br>(3) ປີ 2014 ໂດຍການຮ່ວມມືກັບ ADB and ພາສີຍີ່ປຸ່ນ | ກະຊວງການເງິນ | ຈັດຈ້າງບໍລິສັດເອກະຊົນ ແລະ ຊ່ວຍຊານຈາກອົງກອນສາກົນ |
| 7.7 Trade facilitation measures for authorized operators | ຍັງຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ | ກົມພາສີ, ກະຊວງການເງິນ | **ບັນຫາ:** ຂາດຄວາມຮູ້ ແລະ ປະສົບການໃນການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ. |
| 7.8 Expedited shipments | ການຂົນສິ່ງທີ່ວ່ອງໄວ ບໍ່ໄດ້ລະບຸໄວ້ໃນກົດໝາຍວ່າດ້ວຍພາສີ. | ກະຊວງການເງິນ | |
| 8. Border agency cooperation | ການຮ່ວມມືກັນຂອງບັນດາຂະແໜງການປະຈຳດ່ານ ໄດ້ລະບຸໄວ້ໃນນິຕິກຳຂອງບັນດາຂະແໜງການດັ່ງກ່າວ:<br>1. ກົດໝາຍ ວ່າດ້ວຍ ການປ້ອງກັນພືດ ເລກທີ 06/ສພຊ ລົງວັນທີ 09 ທັນວາ 2008, ມາດຕາ 5 ຫຼັກການກ່ຽວກັບການປ້ອງກັນພືດ ແລະ ມາດຕາ 7 ການຮ່ວມມືສາກົນ<br>2. ກົດໝາຍ ວ່າດ້ວຍພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011, ມາດຕາ 9 ວ່າດ້ວຍການຮ່ວມມືສາກົນ<br>**ບັນຫາ:** ການປະສານງານລະຫວ່າງ ຂະແໜງການ ແລະ ລະຫວ່າງປະເທດແມ່ນມີຄວາມຫຍຸ້ງຍາກໃນການຮັບປະກັນການການຈັດຕັ້ງປະຕິບັດດ້ານຂັ້ນຕອນ ແລະ ການແຈ້ງປ່ອຍສິນຄ້າຢູ່ດ່ານໃຫ້ຢູ່ໃນຮູບແບບດຽວກັນ. | | |
| 10.1 Formalities and documentation requirements | ເອກະສານ ແລະ ພິທີການສຳລັບການນຳເຂົ້າ, ສົ່ງອອກ ແລະ ຜ່ານແດນໄດ້ຮັບການທົບທວນຢູ່ສອງຂະແໜງການ:<br>1. ຂະແໜງການພາສີໄດ້ມີການນຳສະເໜີຂັ້ນຕອນທີ່ມີງ່າຍດາຍ ເພື່ອໃຫ້ແທດເໝາະກັບມາດຕະຖານສາກົນ ຊຶ່ງເປັນສ່ວນໜຶ່ງໃນ | ລະບົບອັດຕະໂນມັດໃນ ຂະແໜງການທີ່ບໍ່ແມ່ນພາສີ | |

| ມາດຕາ | ບົດກຳ | ໂຄງລ່າງພື້ນຖານ/ຂະແໜງການຮັບຜິດຊອບ | ບຸກຄະລາກອນ |
|---|---|---|---|
| | ການຈັດຕັ້ງປະຕິບັດສັນຍາ Kyoto ທີ່ໄດ້ຖືກທົບທວນຄືນແລະ ກອບມາດຕະຖານທີປອດໄພ ຊຶ່ງລວມ ເອົາລະບົບອັດຕະໂນມັດ ແລະ ການຈ່າຍຜ່ານທາງລະບົບອີເລັກໂທຣນິກ.<br>2. ການສ້າງຄວາມກົມກຽວ ແລະ ງ່າຍດາຍໃຫ້ແກ່ຂັ້ນຕອນ ແລະ ເອກະສານຂອງຂະແໜງການທີ່ບໍ່ແມ່ນພາສີ ໄດ້ຖືກຮວບຮວມໄວ້ໃນແຜນການສ້າງຄວາມງ່າຍດາຍ ແລະ ກົມກຽວ ທາງດ້ານຂັ້ນຕອນທາງດ້ານການຄ້າ ຊຶ່ງແຜນການດັ່ງກ່າວໄດ້ຜ່ານການຮັບຮອງຈາກສະມາຊິກ ກຂອຄ.<br>**ບັນຫາ:**<br>1. ຍັງຂາດການນຳໃຊ້ລະບົບອັດຕະໂນມັດໃນຂະແໜງການທີ່ບໍ່ແມ່ນພາສີ<br>2. ຍັງຂາດຮ່າງບົດແນະນຳມາດຕະຖານເຄື່ອງມືອຸປະກອນຕາມມາດຕະຖານສາກົນຢູ່ໃນຂະແໜງການທີ່ບໍ່ແມ່ນພາສີ.<br>3. ຍັງຂາດບຸກຄະລາກອນທີ່ມີທັກສະ ເພື່ອມາຈັດຕັ້ງປະຕິບັດການສ້າງຄວາມງ່າຍດາຍ ແລະ ປັບປຸງລະບົບການດຳເນີນເອກະສານ. | | |
| 10.2 Acceptance of copies | **ບັນຫາ:**<br>1. ຫຼາຍຂະແໜງການ ຍັງຕ້ອງການເອກະສານສະບັບຕົ້ນ ເຊັ່ນ: ເອກະສານ SPS ແລະການແຈ້ງພາສີ.<br>2. ພາຍໃຕ້ກົດໝາຍພາສີ, ການແຈ້ງພາສີຮຽກຮ້ອງໃຫ້ຕ້ອງສະໜອງເອກະສານການແຈ້ງພາສີຂອງປະເທດຕົ້ນທາງ ເພື່ອດຳເນີນການແຈ້ງ. | | |
| 10.3 Use of international standards | - ມີການວິເຄາະຊ່ອງວ່າງຂອງກົດໝາຍພາສີ ເພື່ອໃຫ້ມີຄວາມສອດຄ່ອງກັບ ສົນທິສັນຍາ Kyoto ສະບັບປັບປຸງ ຂອງ WCO.<br>- ຂະແໜງພາສີໄດ້ນຳໃຊ້ HS Code 12.<br>- ASYCUDA ໄດ້ຮັບການຈັດຕັ້ງປະຕິບັດໃນການລະບົບແຈ້ງພາສີ ອີງຕາມຮູບແບບຂໍ້ມູນ ຂອງ WCO ແລະ ມາດຕະຖານຂອງ UNECEC.<br>- ໄດ້ມີການຈັດຕັ້ງມາດຕະການ ສຸຂານາໄມ ແລະ ສຸຂານາໄມພືດ ກ່ຽວກັບ ການອອກອະນຸຍາດການສົ່ງອອກ, ໃບຢັ້ງຢືນດ້ານສຸຂານະໄມພືດ, ວັດສະດຸຫຸ້ມຫໍ່ທີ່ເປັນໄມ້ ແລະ ການນຳ | | |

| ມາດຕາ | ນິຕິກຳ | ໂຄງລ່າງພື້ນຖານ/ຂະແໜງການຮັບຜິດຊອບ | ບຸກຄະລາກອນ |
|---|---|---|---|
| | ໃຊ້ລັງສີ (irradiation) ໃຫ້ໄດ້ຕາມມາດຕະຖານສາກົນ.<br>- ພາຍໃຕ້ກົດໝາຍພາສີ ໄດ້ມີການກຳນົດມາດຕະການ ສຳລັບ ພາສີ ໃນການກວດສອບ ແລະ ກັກສິນຄ້າທີ່ສົງໃສ ວ່າມີການລະເມີດ ລິຂະສິດ ເຄື່ອງໝາຍການຄ້າ ຫຼື ລະເມີດລິຂະສິດ ເພື່ອໃຫ້ສອດຄ່ອງກັບສັນຍາວ່າດ້ວຍ Trade-Related Aspects of Intellectual Property Rights (TRIPS) ຂອງອົງການການຄ້າໂລກ.<br>**<u>ບັນຫາ:</u>**<br>- ຍັງຂາດບຸກຄະລາກອນທີ່ມີທັກສະໃນການຈັດຕັ້ງປະຕິບັດ ແລະ ຕິດຕາມບັນຫາ | | |
| 10.4 Single window | ລັດຖະບານ ສປປ ລາວ ມີພັນທະໃນການສ້າງຕັ້ງລະບົບປະຕູດຽວແຫ່ງຊາດ.<br>ສຳເລັດການທົບທວນຄືນ ບັນຫາທາງດ້ານກົດໝາຍທີ່ກ່ຽວຂ້ອງຕິດພັນກັບ ການບໍລິການລະບົບປະຕູດຽວ (NSW). ກົດໝາຍ ວ່າດ້ວຍທຸລະກຳທາງທຸລະກິດ (E–transaction) ຮັບຮອງການລົງລາຍເຊັນ ຜ່ານທາງລະບົບເອເລັກໂຕຼນິກ. ການສ້າງລະບົບປະຕູດຽວແຫ່ງຊາດລາວ (LNSW) ແມ່ນຂໍ້ກຳນົດຂອງ ລະບົບປະຕູດຽວອາຊຽນ.<br>**<u>ບັນຫາ:</u>** ຍັງຂາດຄວາມຮູ້ ກ່ຽວກັບ ລະບົບປະຕູດຽວແຫ່ງຊາດ. (NSW).<br>ການຈັດຕັ້ງປະຕິບັດສຳລັບຂະແໜງການທີ່ມີສ່ວນຮ່ວມຍັງບໍ່ທັນຈະແຈ້ງ. | ລະບົບແຈ້ງພາສີປະຕູດຽວ | |
| 10.7 Common border procedures and uniform documentation requirements | ຂັ້ນຕອນຢູ່ດ່ານສາກົນ ຕ້ອງມີຮູບແບບດຽວກັນພາຍໃຕ້ກົດໝາຍ ວ່າດ້ວຍພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011, ກົດໝາຍ ວ່າດ້ວຍ ອາຫານ ເລກທີ 33/ສພຊ ລົງວັນທີ 20 ສິງຫາ 2013, ແລະ ກົດໝາຍ ວ່າດ້ວຍ ການປ້ອງກັນພືດ ເລກທີ 06/ສພຊ ລົງວັນທີ 09 ທັນວາ 2008.<br>**<u>ບັນຫາ:</u>** 12 ດ່ານສາກົນ ຍັງບໍ່ໄດ້ນຳໃຊ້ລະບົບ ASYCUDA. | ລະບົບອາຊີກຸດາ | **<u>ບັນຫາ:</u>** ຈຳນວນເຈົ້າໜ້າທີ່ປະຈຳດ່ານ ຍັງບໍ່ພຽງພໍຕໍ່ຄວາມຕ້ອງການຂອງພາກທຸລະກິດ. |
| 10.8 Rejected goods | - ພາຍໃຕ້ກົດໝາຍວ່າດ້ວຍການກັກກັນພືດ, ຜູ້ນຳເຂົ້າອາດສົ່ງສິນຄ້າທີ່ຖືກປະຕິເສດກັບໄປປະເທດຜູ້ສົ່ງອອກພາຍໃຕ້ລະບຽບກົດໝາຍຂອງ ສປປ ລາວ.<br>- ໃນປະຈຸບັນ ກົດໝາຍພາສີ ບໍ່ໄດ້ລະບຸມາດຕະການກ່ຽວກັບການສົ່ງອອກຄືນ. ແຕ່ແນວໃດ | | |

| ມາດຕາ | ນິຕິກຳ | ໂຄງລ່າງພື້ນຖານ/ຂະແໜງການຮັບຜິດຊອບ | ບຸກຄະລາກອນ |
|---|---|---|---|
| | ກໍ່ຕາມ, ມາດຕະການດັ່ງກ່າວໄດ້ຖືກນຳສະເໜີຕໍ່ກອງ ປະຊຸມກຽວໂຕ ຂອງ WCO.<br>**<u>ບັນຫາ:</u>** ບໍ່ມີຂັ້ນຕອນທີ່ເປັນທາງການໃນການຈັດຕັ້ງປະຕິບັດ ແລະ ບໍ່ມີຂັ້ນຕອນທີ່ຈະແຈ້ງໃນກົດໝາຍພາສີ. | | |
| 11. Freedom of transit | ສປປ ລາວ ສາມາດປະຕິບັດມາດຕາ 11 ວ່າດ້ວຍເສລີພາບຂອງການຜ່ານແດນໄດ້ບາງສ່ວນ.<br><u>ຄ່າທຳນຽມ ແລະ ຄ່າບໍລິການ:</u> ດຳລັດເລກທີ: 03/ປປທ, ລົງວັນທີ 19 ພະຈິກ 2008, ວ່າດ້ວຍການເກັບຄ່າບໍລິການເພື່ອບຳລຸງຮັກສາລະບົບ **ASYCUDA** ເຊິ່ງບໍ່ໄດ້ລະບຸສະເພາະສິນຄ້າຜ່ານແດນ.<br>**<u>ບັນຫາ:</u>** ບໍ່ມີໂຄງລ່າງພື້ນຖານທີ່ແຍກກັນລະອຽດ ລະຫວ່າງການເຄື່ອນຍ້າຍສິນຄ້າຜ່ານແດນ ແລະ ການນຳເຂົ້າ | ເສັ້ນທາງການຂົນສິ່ງທີ່ແຍກກັນລະອຽດ ລະຫວ່າງການເຄື່ອນຍ້າຍສິນຄ້າຜ່ານແດນ ແລະ ການນຳເຂົ້າ | |
| 12. Customs cooperation | ການຮ່ວມມືທາງດ້ານພາສີ ໄດ້ລະບຸໃນ ກົດໝາຍ ວ່າດ້ວຍພາສີ ເລກທີ 04/ສພຊ ລົງວັນທີ 20 ທັນວາ 2011, <u>ມາດຕາ 9</u> ວ່າດ້ວຍ ການຮ່ວມມືສາກົນ ເຊິ່ງໄດ້ລະບຸໄວ້ວ່າ: “ລັດເປີດກວ້າງ ແລະ ສົ່ງເສີມໃຫ້ມີການພົວພັນ, ຮ່ວມມືກັບຕ່າງປະ ເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານພາສີ ດ້ວຍການແລກປ່ຽນບົດຮຽນ , ຂໍ້ມູນຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຝຶກອົບຮົມ ແລະ ການກໍ່ສ້າງຍົກລະດັບພະນັກງານ ແລະ ວຽກງານອື່ນໆ, ປະຕິບັດສັນຍາ, ອະນຸສັນຍາ ແລະ ສົນທິສັນຍາສາກົນທີ່ ສປປລາວ ເປັນພາຄີ”<br>**<u>ບັນຫາ:</u>** ຍັງຂາດການຮ່ວມມື ແລະ ການປະສານງານໂດຍສະເພາະກ່ຽວກັບສິນຄ້າຜ່ານແດນ | ກົມພາສີ, ກະຊວງການເງິນ | |

*ແຫຼ່ງຂໍ້ມູນ:* ສະຫຼຸບຜົນຈາກກອງປະຊຸມ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການປະເມີນຄວາມຕ້ອງການ ແລະ ບູລິມະສິດຂອງ ສປປ ລາວ ລະຫວ່າງວັນທີ 27-29 ກໍລະກົດ 2015.

ຕາຕະລາງທີ A.4: ປຽບທຽບມາດຕະການທີ່ຈັດຢູ່ໃນໝວດ A ຂອງ ສປປ ລາວ ກັບ ປະເທດໃນກຸ່ມອາຊຽນ

| Article | | Brunei | Indonesia | Philippines | Malaysia | Thailand | Vietnam | Singapore | Lao PDR |
|---|---|---|---|---|---|---|---|---|---|
| 1.1 | Publication | A | | A | | A | | A | A |
| 1.2 | Information Available Through Internet | | | A | | A | | A | A |
| 1.3 | Enquiry Points | A | | A | | A | A | A | A |
| 1.4 | Notification | A | | A | | A | A | A | A |
| 2.1 | Opportunity to Comment | A | | A | A | A | A | A | |
| 2.2 | Consultations | A | | | A | A | A | A | |
| 3 | Advance Rulings | A | | A | A | | | A | |
| 4 | Procedures for Appeal or Review | | | A | A | | A | A | A |
| 5.1 | Notifications for enhanced controls or inspections | A | | | A | A | | A | A |
| 5.2 | Detention | A | | A | A | A | | A | A |
| 5.3 | Test Procedures | A | | A | A | | | A | |
| 6.1 | General Disciplines on Fees and Charges | A | | A | A | A | A | A | |
| 6.2 | Specific Disciplines on Fees and Charges for Customs | A | | A | A | A | A | A | A |
| 6.3 | Penalty Disciplines | A | A | A | A | | | A | |
| 7.1 | Pre-arrival Processing | A | A | A | A | | | A | A |
| 7.2 | Electronic Payment | A | | | A | A | | A | |
| 7.3 | Separation of Release | A | | A | A | A | | A | |
| 7.4 | Risk Management | A | | A | A | | | A | |
| 7.5 | Post-Clearance Audit | A | | | A | | | A | |
| 7.6 | Establishment and Publication of Average Release Times | | | A | A | | | A | |
| 7.7 | Trade Facilitation Measures for Authorized Operators | | | A | A | | | A | |
| 7.8 | Expedited Shipments | A | | A | | | A | A | |
| 7.9 | Perishable Goods | A | | A | A | | | A | |
| 8 | Border Agency Cooperation | A | | | A | | | A | |
| 9 | Movement of Goods intended for Import under Customs Control | A | | A | A | | A | A | A |
| 10.1 | Formalities and Documentation Requirements | A | | | A | A | A | A | |
| 10.2 | Acceptance of Copies | A | | A | A | A | A | A | |
| 10.3 | Use of International Standards | A | | A | A | A | | A | |
| 10.4 | Single Window | | | | A | A | | A | |
| 10.5 | Pre-shipment Inspection | A | | A | A | A | | A | A |
| 10.6 | Use of Customs Brokers | A | A | A | A | A | A | A | A |
| 10.7 | Common Border Procedures | A | | A | A | A | A | A | |
| 10.8 | Rejected Goods | A | | | A | A | | A | |
| 10.9 | Temporary Admission of Goods | A | | A | | | | A | A |
| 11 | Freedom of Transit | A | | | A | A | A | A | |
| 12 | Customs Cooperation | A | | A | A | A | A | A | |

*ໝາຍເຫດ:* ກຳປູເຈຍ ແລະ ມຽນມາ ຍັງບໍ່ທັນໄດ້ແຈ້ງ ໝວດ A ຕໍ່ຄະນະກຳມະການ WTO.

*ແຫຼ່ງຂໍ້ມູນ:* ຖານຂໍ້ມູນຂອງ WTO “Trade Facilitation Agreement Notifications Database”, available at http://tfand.wto.org/#/Home. Accessed August 2015.

ຕາຕະລາງທີ A.5: ປຽບທຽບມາດຕະການທີ່ຈັດຢູ່ໃນໝວດ A ຂອງ ສປປ ລາວ ກັບ ປະເທດບໍ່ມີທາງອອກສູ່ທະເລ ແລະ ປະເທດດ້ອຍພັດທະນາ

| Article | | Burundi | Lao PDR | Rwanda (LLDC) | Senegal (LDC) | Tanzania |
|---|---|---|---|---|---|---|
| 1.1 | Publication | | A | | | |
| 1.2 | Information Available Through Internet | | A | | | |
| 1.3 | Enquiry Points | | A | | | |
| 1.4 | Notification | A | A | A | | |
| 2.1 | Opportunity to Comment | | | | A | |
| 2.2 | Consultations | | | | A | |
| 3 | Advance Rulings | | | | A | |
| 4 | Procedures for Appeal or Review | | A | | | A |
| 5.1 | Notifications for enhanced controls or inspections | | A | | A | |
| 5.2 | Detention | A | A | A | A | A |
| 6.2 | Specific Disciplines on Fees and Charges for Customs | | A | A | | |
| 6.3 | Penalty Disciplines | | | | A | |
| 7.1 | Pre-arrival Processing | | A | A | A | |
| 7.2 | Electronic Payment | | | A | A | |
| 7.3 | Separation of Release | | | A | A | |
| 7.4 | Risk Management | | | A | | |
| 7.5 | Post-Clearance Audit | | | A | A | A |
| 7.8 | Expedited Shipments | A | | | | |
| 7.9 | Perishable Goods | | | A | | |
| 8 | Border Agency Cooperation | | | | A | |
| 9 | Movement of Goods intended for Import under Customs Control | | A | A | | A |
| 10.1 | Formalities and Documentation Requirements | | | | A | |
| 10.2 | Acceptance of Copies | | | A | A | |
| 10.3 | Use of International Standards | | | | A | |
| 10.5 | Pre-shipment Inspection | A | A | A | | A |
| 10.6 | Use of Customs Brokers | A | A | | | A |
| 10.7 | Common Border Procedures | | | A | | |
| 10.8 | Rejected Goods | A | | A | | |
| 10.9 | Temporary Admission of Goods | A | A | | | |
| 11 | Freedom of Transit | | | A | | |
| 12 | Customs Cooperation | A | | | | |

*ໝາຍເຫດ:* LDC ໝາຍເຖິງ ປະເທດດ້ອຍພັດທະນາ. LLDC ໝາຍເຖິງ ປະເທດກຳລັງພັດທະນາທີ່ບໍ່ມີທາງອອກສູ່ທະເລ.

*ແຫຼ່ງຂໍ້ມູນ:* ຖານຂໍ້ມູນຂອງ WTO “Trade Facilitation Agreement Notifications Database”, available at http://tfand.wto.org/#/Home. Accessed August 2015.